ສງງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

13-16 ພະຈິກ 2022
ປີທີ 11
ສະບັບທີ 891

## ສຳເລັດກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນພະຈິກ 2022

(ສພຊ) ປະຕິບັດຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ມາດຕາ 67 ກ່ຽວກັບກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ໃນລະຫວ່າງວັນທີ 9-11 ພະຈິກ 2022 ຄະນະປະຈຳສະພາແຫ່ງຊາດ ໄດ້ດຳເນີນກອງປະຊຸມສະໄໝສາມັນປະຈຳເດືອນພະຈິກ 2022 ຂອງຕົນຂຶ້ນຢູ່ທີ່ຫ້ອງປະຊຸມຄະນະປະຈຳສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ, ເຂົ້າຮ່ວມກອງປະຊຸມດັ່ງກ່າວ ມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ, ກຳມະການຄະນະປະຈຳສະພາແຫ່ງຊາດ ແລະ ແຂກທີ່ຖືກເຊີນຈາກພາສ່ວນທີ່ກ່ຽວຂ້ອງ.






ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນພະຈິກ 2022 ໄດ້ຮັບຟັງການລາຍງານ, ການກວດກາ ແລະ ໃຫ້ທິດຊີ້ນຳຕໍ່ບັນດາເນື້ອໃນທີ່ຈະນຳເຂົ້າພິຈາລະນາ ຢູ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເປັນຕົ້ນ ບົດລາຍງານການກະກຽມຄວາມພ້ອມຮອບດ້ານ ໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳ ປີ 2022 ແລະ ແຜນການປະຈຳປີ 2023 ຂອງສະພາແຫ່ງຊາດ; ບົດລາຍງານຜົນການກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍຈຳນວນ 4 ສະບັບ ຄື ຮ່າງກົດໝາຍວ່າດ້ວຍຫໍພິພິຕະພັນ, ຮ່າງກົດໝາຍວ່າດ້ວຍການທາງນ້ຳ, ຮ່າງກົດໝາຍວ່າດ້ວຍທະບຽນສານ ແລະ ຮ່າງກົດໝາຍວ່າດ້ວຍວິສາຫະກິດ; ບົດລາຍງານຜົນການທາບທາມຮ່າງກົດໝາຍ ຈຳນວນ 12 ສະບັບທີ່ຈະນຳເຂົ້າພິຈາລະນາຢູ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX; ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ບົດລາຍງານຄວາມຄືບໜ້າຂອງການ

ອ່ານຕໍ່ໜ້າ 2

## ປະທານສະພາແຫ່ງຊາດ ຕ້ອນຮັບປະທານຄະນະກຳມະການກວດກາສູນກາງພັກກອມມູນິດຫວຽດນາມ



(ສພຊ) ວັນທີ 10 ພະຈິກ 2022 ທີ່ສະພາແຫ່ງຊາດ ນະຄອນຫລວງວຽງຈັນ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ຕ້ອນຮັບການເຂົ້າພົບປະກັບສະຫາຍ ເຈິ່ນ ເກິ່ມຕູ້ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ປະ

ອ່ານຕໍ່ໜ້າ 2

## ກອງປະຊຸມພົບປະລະຫວ່າງຜູ້ນຳໄອປາ ແລະ ຜູ້ນຳອາຊຽນ ທີ່ຣາຊະອານາຈັກກຳປູເຈຍ



(ສພຊ) ໃນລະຫວ່າງວັນທີ 9-11 ພະຈິກຜ່ານມານີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມພົບປະລະຫວ່າງຜູ້ນຳສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫລື AIPA ແລະ ຜູ້ນຳອາຊຽນ ໃນລະຫວ່າງກອງປະຊຸມສຸດຍອດອາຊຽນ ຄັ້ງທີ 40 ແລະ 41 ທີ່ພະນົມເປັນ ຣາ

ອ່ານຕໍ່ໜ້າ 3

## ຮອງປະທານສະພາແຫ່ງຊາດ ມອບຫລຽນລາງວັນການແຂ່ງຂັນກິລາເປຕັງ ທົ່ວປະເທດ

(ສພຊ) ວັນທີ 11 ພະຈິກຜ່ານມາ, ທີ່ສະໜາມກິລາເປຕັງແຫ່ງຊາດລາວ ດົງໂດກ, ສະຫະພັນກິລາເປຕັງແຫ່ງຊາດລາວ ໄດ້ຈັດການແຂ່ງຂັນກິລາເປຕັງທົ່ວປະເທດ ຊິງຂັນປະທານສະພາແຫ່ງຊາດ ຄັ້ງທີ 10 ປະຈຳປີ 2022, ມອບຫລຽນລາງວັນໃຫ້ນັກກິລາທີ່ຊະນະເລີດ ໂດຍທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ, ເຂົ້າຮ່ວມມີຄະນະນຳ, ຄູເຝິກ ແລະ ນັກກິລາຂອງທຸກພາກສ່ວນທີ່ໄດ້ເຂົ້າຮ່ວມການແຂ່ງຂັນ, ພາກສ່ວນອຸປະຖຳ ກໍຄື ບໍລິສັດ ຫ້າງຮ້ານ ທັງພາກລັດ ແລະ ເອກະຊົນ ຕະຫລອດເຖິງພໍ່ແມ່ປະຊາຊົນບັນດາເຜົ່າ, ບັນດາທ່ານຜູ້ຊົມທຸກທົ່ວໜ້າທີ່ໄດ້ເຂົ້າຮ່ວມເຊຍ ເຮັດໃຫ້ງານແຂ່ງຂັນຄັ້ງນີ້ມີຄວາມຟົດຟື້ນມ່ວນຊື່ນ.

ການແຂ່ງຂັນຄັ້ງນີ້ ມີ 6 ລາຍການ ຄື: ດ່ຽວຍິງ, ຄູ່ຍິງ, ຄູ່ຊາຍ, ຄູ່ກິຕິມະສັກ VIP ແລະ ທີມຊຸດຊາຍ ເຊິ່ງມີຄະນະນຳ, ຄູເຝິກ ແລະ ນັກກິລາເຂົ້າຮ່ວມທັງໝົດ 374 ຄົນ ຍິງ 161 ຄົນ ທີ່ມາຈາກ 49 ພາກສ່ວນຄື: 9 ແຂວງ, 12 ກະຊວງ, ອົງການ-ສະຖາ

ອ່ານຕໍ່ໜ້າ 3

## ກປຊສ ປະຊຸມຮ່ວມກັບຄະນະປະສານງານ 3 ພາກສ່ວນ



(ສພຊ) ວັນທີ 7 ພະຈິກ 2022, ທີ່ກະຊວງປ້ອງກັນປະເທດ ໄດ້ຈັດກອງປະຊຸມສະຫລຸບຖອດຖອນບົດຮຽນວຽກງານປະສານງານລະຫວ່າງກຳມະທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ສະພາແຫ່ງຊາດ ກັບຄະນະປະສານງານກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ສະຫະພັນ

ອ່ານຕໍ່ໜ້າ 2

## ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX


ໜ້າ 3

## ຮອງເລຂາທິການ ສພຊ ພົບປະເຈົ້າໜ້າທີ່ອາວຸໂສ ຂອງສະພາສູງ ສ. ອາເມລິກາ

(ສພຊ) ວັນທີ 1 ພະຈິກ 2022 ທີ່ສະພາແຫ່ງຊາດ, ທ່ານ ປອ. ບຸນທັນ ບຸນວິໄລ ຮອງເລຂາທິການສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ພົບປະ ແລະ ເຮັດວຽກ ກັບທ່ານ Paul Grove ເຈົ້າໜ້າທີ່ອາວຸໂສ ກຳມາທິການດ້ານຈັດສັນແຜນງົບປະມານ ຂອງສະພາສູງ ສະຫະລັດອາເມລິກາ ພ້ອມດ້ວຍຄະນະຜູ້ແທນສະຖານເອກອັກຄະລັດຖະທູດອາເມລິກາ ແລະ ອົງການ USAID.

ໃນການພົບປະຄັ້ງນີ້, ສອງຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນຍາວນານ ບົນພື້ນຖານການເປັນຄູ່ຮ່ວມມືແບບກວມລວມ ລະຫວ່າງ ສປປລາວ ແລະ ສ. ອາເມລິກາ ເວົ້າລວມ, ເວົ້າສະເພາະ ລະຫວ່າງສອງອົງການນິຕິບັນຍັດ ໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນ

ອ່ານຕໍ່ໜ້າ 3


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5


ໜ້າ 5

## ປະທານ...

ທານຄະນະກຳມະການກວດກາສູນກາງພັກກອມມູນິດຫວຽດນາມ.

ໃນການຢ້ຽມຢາມຄັ້ງນີ້, ແມ່ນຢູ່ໃນບັນຍາກາດທີ່ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ພວມພ້ອມກັນສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ ປີ 2022 ຢ່າງເປັນຂະບວນຟົດຟື້ນ ແລະ ມີຄວາມໝາຍສຳຄັນອັນເລິກເຊິ່ງ, ເປັນການນຳເອົາໄມຕີຈິດມິດຕະພາບ, ຄວາມສາມັກຄີຮັກແພງສະໜິດສະໜົມຖານສະຫາຍອ້າຍນ້ອງມາສູ່ປະຊາຊົນລາວ ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ.



ໂອກາດດັ່ງກ່າວ, ທັງສອງຝ່າຍໄດ້ແຈ້ງໃຫ້ຊາບໂດຍຫຍໍ້ກ່ຽວກັບສະພາບເສດຖະກິດ-ສັງຄົມ ແລະ ການເຄື່ອນໄຫວຂອງອົງການຂອງຕົນໃຫ້ກັນ ແລະ ກັນຊາບໂດຍສັງເຂບ; ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຕ້ອນຮັບອັນອົບອຸ່ນ ແລະ ສະໜິດສະໜົມມາຍັງສະຫາຍ ເຈິ່ນ ເກິມ ຕູ໋ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ປະທານຄະນະກຳມະການກວດກາສູນກາງພັກກອມມູນິດຫວຽດນາມ ພ້ອມດ້ວຍຄະນະ ທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປລາວ ໃນຄັ້ງນີ້. ພ້ອມທັງຕີລາຄາສູງຕໍ່ຜົນສຳເລັດການພົບປະ ແລະ ເຮັດວຽກ ລະຫວ່າງຄະນະກວດກາສູນກາງພັກ ປະຊາຊົນ ປະຕິວັດລາວ ແລະ ຄະນະກຳມະການກວດກາສູນກາງພັກກອມມູນິດຫວຽດນາມ ໃນໂອກາດຢ້ຽມຢາມຄັ້ງນີ້ ເຫັນວ່າສອງຝ່າຍ ໄດ້ຕີລາຄາຄືນການພົວພັນ ແລະ ການຮ່ວມມືນຳກັນ ໃນໄລຍະຜ່ານມາ ແລະ ຮ່ວມກັນເປັນເອກະພາບ ກ່ຽວກັບທິດທາງຮ່ວມມືນຳກັນໃນຕໍ່ໜ້າ; ນອກນີ້, ສະຫາຍປະທານສະພາແຫ່ງຊາດລາວ ຍັງໄດ້ສະແດງຄວາມຊົມເຊີຍບັນດາຜົນສຳເລັດອັນໃຫຍ່ຫລວງຮອບດ້ານ ທີ່ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ຍາດໄດ້ໃນການພັດທະນາເສດຖະກິດ-ສັງຄົມ ໃນສະພາບທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19; ພັກ, ລັດຖະບານຫວຽດນາມ ໄດ້ເອົາໃຈໃສ່ເຮັດທັງສອງໜ້າວຽກໄປພ້ອມໆກັນ ທັງສະກັດກັ້ນພະຍາດໂຄວິດ-19 ຢ່າງມີຜົນສຳເລັດ ທັງຟື້ນຟູເສດຖະກິດອັນໄດ້ເຮັດໃຫ້ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງດ້ວຍຈັງຫວະສູງ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ; ຫວຽດນາມໄດ້ເປັນຈຸດສູນກາງໃຫ້ແກ່ນັກລົງທຶນຕ່າງປະເທດໃນປັດຈຸບັນ.

ສະຫາຍປະທານສະພາແຫ່ງຊາດລາວ ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສອງປະເທດ ລາວ-ຫວຽດນາມ ທີ່ໄດ້ຮັບການເສີມຂະຫຍາຍທັງທາງກວ້າງ ແລະ ທາງເລິກເປັນຕົ້ນການພົວພັນດ້ານການເມືອງ, ປກຊ-ປກສ, ການຕ່າງປະເທດ ສືບຕໍ່ມີຄວາມໜັກແໜ້ນ, ການພົວພັນດ້ານເສດຖະກິດ-ການຄ້າ, ການລົງທຶນ, ການພົວພັນຮ່ວມມືລະຫວ່າງທ້ອງຖິ່ນຕ່າງໆຂອງສອງປະເທດ ສືບຕໍ່ແໜ້ນແຟ້ນ. ພິເສດ, ພັກ, ສະພາແຫ່ງຊາດ ແລະ ລັດຖະບານຫວຽດນາມ ຍັງໄດ້ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫລືອແກ່ ສປປລາວ ຕະຫລອດມາ ເປັນຕົ້ນແມ່ນໄດ້ບໍແບ່ງທຶນຮອນອັນໃຫຍ່ຫລວງ ໃຫ້ແກ່ການກໍ່ສ້າງຕຶກຫໍສະພາແຫ່ງຊາດລາວຫລັງໃໝ່ ເຊິ່ງໄດ້ສຳເລັດສົມບູນຕາມຄາດໝາຍ; ພ້ອມທັງຍັງໄດ້ຈັດຝຶກອົບຮົມ ແລະ ແລກປ່ຽນຫົວຂໍ້ສະເພາະໃຫ້ແກ່ການນຳຂັ້ນສູງຂອງລາວ.

ພ້ອມນັ້ນ, ຍັງໄດ້ສະແດງຄວາມພູມໃຈທີ່ເຫັນວ່າ ການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ ໄດ້ຮັບການເສີມຂະຫຍາຍແໜ້ນແຟ້ນຍິ່ງໆຂຶ້ນ ເຊິ່ງສະແດງອອກໃນການແລກປ່ຽນການຢ້ຽມຢາມ ເຊິ່ງກັນແລະກັນ, ພົບປະທາງໄກ, ຈັດກອງປະຊຸມສຳມະນາແລກປ່ຽນບົດຮຽນຕ່າງໆຮ່ວມກັນ, ສົ່ງຊ່ຽວຊານຫວຽດນາມມາໃຫ້ບົດຮຽນແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານສະພາແຫ່ງຊາດລາວ, ມີການພົວພັນຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນ ຢ່າງໜັກແໜ້ນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ. ພິເສດ, ໃນລະຫວ່າງວັນທີ 15-17 ພຶດສະພາ 2022 ຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດຫວຽດນາມ ນຳໂດຍສະຫາຍ ເວືອງ ດິງ ເຫວະ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ປະທານສະພາແຫ່ງຊາດ ແຫ່ງ ສສ. ຫວຽດນາມ ພ້ອມດ້ວຍຄະນະ ໄດ້ມາຢ້ຽມຢາມສັນຖະວະໄມຕີ ສປປລາວ ຢ່າງເປັນທາງການ, ສອງຝ່າຍໄດ້ຮ່ວມກັນເຊັນບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມື (MOU) ລະຫວ່າງສອງສະພາແຫ່ງຊາດ ລາວ-ຫວຽດນາມ ສະບັບໃໝ່ ແລະ ເປັນສັກຂີພະຍານໃນການລົງນາມບົດບັນທຶກວ່າດ້ວຍການຮ່ວມມືລະຫວ່າງຄະນະເລຂາທິການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ສະບັບໃໝ່.

ພິເສດ, ໃນປີ 2022 ເປັນປີສາມັກຄີມິດຕະພາບລາວ-ຫວຽນາມ, ສອງສະພາແຫ່ງຊາດຂອງສອງປະເທດກໍໄດ້ຈັດກິດຈະກຳຫລາຍຢ່າງເພື່ອສະເຫລີມສະຫລອງປີສາມັກຄີ ກໍຄືສອງວັນປະຫວັດສາດແຫ່ງການພົວພັນລະຫວ່າງສອງປະເທດ ຄືວັນສ້າງຕັ້ງສາຍພົວພັນທາງການທູດ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືລາວ-ຫວຽດນາມ ຄົບຮອບ 45 ປີ ມີການແລກປ່ຽນບົດຮຽນລະຫວ່າງກຳມາທິການຕ່າງໆ ຂອງສະພາແຫ່ງຊາດ ເປັນປົກກະຕິ ເຊິ່ງເປັນການສະແດງໃຫ້ເຫັນເຖິງຄວາມມີຊີວິດຊີວາ ແຫ່ງສາຍພົວພັນພິເສດ ລາວ-ຫວຽດນາມ.

(ຂ່າວ: ສົມນຶກ ແກ້ວໄຊຍະຈັກ ແລະ ພາບ: ນາງ ກຸກກິກ ບຸດດາໄຊ)



## ກປຊສ...

ນັກຮົບເກົ່າແຫ່ງຊາດ ໂດຍການເປັນປະທານຂອງສະຫາຍ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ມີຄະນະນຳກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ສະຫະພັນນັກຮົບເກົ່າແຫ່ງຊາດ, ບັນດາສະຫາຍຕາງໜ້າຈາກກຳມາທິການຈາກສະພາແຫ່ງຊາດ ຊຸດທີ IX ແລະ ບັນດາສະຫາຍຈາກອົງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໂອກາດນີ້, ສະຫາຍ ພົຈວ. ມາລາ ວິລະຈິດ ຮອງປະທານກຳມະທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ໄດ້ຂຶ້ນຜ່ານບົດສະຫລຸບຕີລາຄາການເຄື່ອນໄຫວປະສານງານໃນໄລຍະ 10 ເດືອນປີ 2022, ທິດທາງແຜນການທ້າຍປີ 2022 ແລະ ແຜນການປະຈຳປີ 2023 ເຊິ່ງໄດ້ຍົກໃຫ້ເຫັນການຊີ້ນຳ-ນຳພາຂອງແຕ່ລະພາກສ່ວນ ໃນການຊຸກຍູ້ຈັດຕັ້ງປະຕິບັດຂໍ້ຕົກລົງຮ່ວມໃຫ້ແກ່ການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງແຕ່ຫົວທີແມ່ນເປັນຜົນດີຕໍ່ການແກ້ໄຂວຽກງານດ້ານຕ່າງໆ ເພື່ອຄວາມເປັນເອກະພາບໃນສະເພາະໜ້າ ແລະ ຍາວນານ, ພາກສ່ວນທີ່ກ່ຽວຂ້ອງແຕ່ລະຂັ້ນໄດ້ຍົກສູງຄວາມຮັບຜິດຊອບຂອງຕົນ ຕໍ່ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ເວົ້າລວມ, ເວົ້າສະເພາະແມ່ນການຈັດຕັ້ງປະຕິບັດຂໍ້ຕົກລົງຮ່ວມຂອງແຕ່ລະພາກສ່ວນ ດ້ວຍຄວາມຮັບຜິດຊອບສູງ, ກຳແໜ້ນສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ເປັນຕົ້ນແມ່ນສິດ ແລະ ໜ້າທີ່ດ້ານນິຕິບັນຍັດ, ສິດ ແລະ ໜ້າທີ່ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ສິດ ແລະ ໜ້າທີ່ດ້ານການຕິດຕາມກວດກາ. ກອງປະຊຸມສະຫລຸບຖອນຖອນບົດຮຽນໃນຄັ້ງນີ້ ກປຊສ ສະພາແຫ່ງຊາດ, ຄະນະປະສານງານກະຊວງປ້ອງກັນປະເທດ-ປ້ອງກັນຄວາມສະຫງົບ ແລະ ສະຫະພັນນັກຮົບເກົ່າແຫ່ງຊາດ ຍັງໄດ້ປະກອບຄຳຄິດເຫັນໃສ່ຮ່າງເນື້ອໃນເພື່ອແນໃສ່ໃຫ້ມີຄວາມເປັນເອກະພາບ ແລະ ການສ້າງຄວາມເຂົ້າໃຈເຊິ່ງກັນແລະກັນ ຂອງແຕ່ລະພາກສ່ວນໃນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ໃຫ້ໄປທິດທາງດຽວກັນ.

ສະຫາຍ ພົທ. ສຸວອນ ເລືອງບຸນມີ ໄດ້ມີຄຳເຫັນໂອ້ລົມຫລາຍບັນຫາທີ່ສຳຄັນ ພ້ອມທັງເນັ້ນໃຫ້ແຕ່ລະພາກສ່ວນປະຕິບັດຕາມຫລັກການປະສານງານຢ່າງເຂັ້ມງວດ ເປັນຕົ້ນແມ່ນການປະຕິບັດຕາມລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ຂໍ້ຕົກລົງຮ່ວມຂອງຕົນຢ່າງເຂັ້ມງວດ, ເຄົາລົບ ແລະ ປະຕິບັດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແຕ່ລະພາກສ່ວນໃຫ້ຖືກຕ້ອງ, ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ປະຕິບັດຫລັກການລວມສູນປະຊາທິປະໄຕ, ຕັດສິນເປັນໝູ່ຄະນະດ້ວຍຄວາມຮັບຜິດຊອບສູງ ແລະ ສຳຄັນແມ່ນຮັກສາຄວາມລັບຂອງວຽກງານຕົນຢ່າງເດັດຂາດ, ເຂັ້ມງວດ, ແຕ່ລະພາກສ່ວນ ຕ້ອງຄົ້ນຄວ້າກຳແໜ້ນຢ່າງເລິກເຊິ່ງ ບັນດາເນື້ອໃນຂອງແຜນການປະສານງານທີ່ໄດ້ຜ່ານກອງປະຊຸມໄປແລ້ວນັ້ນ ເພື່ອຫັນເປັນແຜນການປະຈຳປີ, ປະຈຳເດືອນ ຢ່າງລະອຽດ ຂອງແຕ່ລະພາກສ່ວນ ແລະ ມີມາດຕະການຈັດຕັ້ງປະຕິບັດຢ່າງເໝາະສົມ ເຮັດໃຫ້ທຸກເນື້ອໃນຂອງແຜນການຖືກຈັດຕັ້ງປະຕິບັດຢ່າງມີຄຸນນະພາບ ແລະ ມີປະສິດທິຜົນສູງ ແລະ ອີກດ້ານໜຶ່ງທີ່ສຳຄັນເພື່ອຈັດຕັ້ງປະຕິບັດແຜນການໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້ ແຕ່ລະພາກສ່ວນຕ້ອງໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດຂໍ້ຕົກລົງຮ່ວມວ່າດ້ວຍການປະສານງານທີ່ໄດ້ລົງນາມຮ່ວມກັນໃຫ້ເຂັ້ມງວດ. ເອົາໃຈໃສ່ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ການປະສານງານ ໂດຍສະເພາະແມ່ນການຈັດຕັ້ງເຝິກອົບຮົມສ້າງຂີດຄວາມສາມາດໃນການປະຕິບັດໜ້າທີ່ວຽກງານໃຫ້ແກ່ກົງຈັກການຈັດຕັ້ງທີ່ເປັນເສນາທິການຊ່ວຍວຽກຂອງແຕ່ລະພາກສ່ວນໃຫ້ມີລະດັບຄວາມຮູ້ ແລະ ຄວາມຊຳນິຊຳນານໃນການປະຕິບັດໜ້າທີ່ວຽກງານ ໂດຍສະເພາະແມ່ນການຍົກລະດັບຄວາມຮັບຮູ້ດ້ານກົດໝາຍ, ລະດັບການຂີດຂຽນ, ລະດັບການຄົ້ນຄວ້າ, ວິເຄາະ, ວິໄຈ ແລະ ສະໜອງຂໍ້ມູນຂ່າວສານໃຫ້ຖືກຕ້ອງ, ຊັດເຈນ, ວ່ອງໄວ ແລະ ທັນກັບສະພາບການຫລາຍຂຶ້ນ. ຄຽງຄູ່ກັນນີ້, ກໍຕິດພັນກັບການປະຕິບັດນະໂຍບາຍຕໍ່ພະນັກງານທັງສອງກຳລັງທີ່ມາປະຈຳການຢູ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

## ສຳເລັດ...

ຈັດຕັ້ງປະຕິບັດ ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; ຮ່າງບົດລາຍງານຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023; ບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສານປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ; ບົດລາຍງານຂອງອົງການໄອຍະການປະຊາຊົນ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ. ພ້ອມກັນນັ້ນ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຍັງໄດ້ຮັບຟັງບົດລາຍງານຜົນຂອງການຕິດຕາມກວດກາໃນຫົວຂໍ້ຕ່າງໆ ເປັນຕົ້ນ ບົດລາຍງານຜົນການຕິດຕາມກວດກາວຽກງານຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ສະຫະພັນນັກຮົບເກົ່າ ທີ່ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; ບົດລາຍງານຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ ຈາກໂຄງການກໍ່ສ້າງນ້ຳອູ 3 ແລະ ນ້ຳອູ 4; ບົດລາຍງານການອອກໃບຕາດິນ; ບົດລາຍງານການຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກຳ ກ່ຽວກັບການຊຸກຍູ້ສົ່ງເສີມປັດໄຈການຜະລິດ ເປັນຕົ້ນ ການຜະລິດອາຫານສັດ, ຝຸ່ນ ເພື່ອຕອບສະໜອງຄວາມຕ້ອງການພາຍໃນທົດແທນການນຳເຂົ້າ; ບົດລາຍງານການສ້າງວິຊາຊີບ, ພັດທະນາສີມືແຮງງານ ແລະ ການສ້າງວຽກເຮັດງານທຳຂອງປະຊາຊົນ ເພື່ອແກ້ໄຂບັນຫາການວ່າງງານ; ບົດລາຍງານການເຂົ້າຮຽນໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ສົກຮຽນ 2022-2023 ແລະ ບົດລາຍງານຜົນການກວດກາຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ 6 ເດືອນທ້າຍປີ 2022 ແລະ ຫົວຂໍ້ອື່ນອີກຈຳນວນໜຶ່ງ. ສຳລັບວຽກງານການຕ່າງປະເທດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໄດ້ຮັບຟັງການລາຍງານກ່ຽວກັບຜົນສຳເລັດການເຂົ້າຮ່ວມກອງປະຊຸມລັດຖະສະພາອາຊີປາຊີຟິກ (APPF) ຄັ້ງທີ 30 ແລະ ການເຄື່ອນໄຫວຢ້ຽມຢາມຢ່າງເປັນທາງການຂອງຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດ ເຊິ່ງນຳພາໂດຍທ່ານປະທານສະພາແຫ່ງຊາດ ແຫ່ງ ສປປລາວ ຢູ່ຣາຊະອານາຈັກໄທ; ບົດລາຍງານການກະກຽມຄວາມພ້ອມໃຫ້ແກ່ຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດ ແຫ່ງ ສປປລາວ ເຊິ່ງນຳພາໂດຍທ່ານປະທານສະພາແຫ່ງຊາດ ໃນການເຂົ້າຮ່ວມກອງປະຊຸມລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 43 ແລະ ການເຄື່ອນໄຫວຢ້ຽມຢາມທາງການຢູ່ ຣາຊະອານາຈັກກຳປູເຈຍ.

(ນາງ ໄຊໂສພາພອນ ມີ່ງມຸງຄຸນ)



## ຮອງປະທານ...

ບັນ 10 ພາກສ່ວນ ແລະ ສະໂມສອນກິລາເປຕັງທົ່ວປະເທດ 18 ພາກສ່ວນ ເຊິ່ງຜົນຂອງການແຂ່ງຂັນ ສາມາດສະຫລຸບໄດ້ດັ່ງນີ້:

1. ດ່ຽວຊາຍ ທົ່ວໄປ ຊະນະເລີດໄດ້ແກ່: ທ້າວ ແກ້ວອຸດອນ ພະກອນຄໍາ ມາຈາກກະຊວງໂຍທາທິການ ແລະ ຂົນສົ່ງ; ຮອງຊະນະເລີດ ໄດ້ແກ່: ທ້າວ ແປບຊີ ແກ້ວວິໄລ ນະຄອນຫລວງວຽງຈັນ; ອັນດັບທີ III ຮ່ວມ ໄດ້ແກ່: ທ້າວ ປີ້ໂນ ພັນທະລີ ແຂວງຄໍາມ່ວນ ແລະ ທ້າວ ວຽງນະຄອນປີຍະເດດວິທະຍາສາດສຸຂະພາບ.

2. ດ່ຽວຍິງ ທົ່ວໄປ ຊະນະເລີດ ໄດ້ແກ່: ນາງ ໄກ່ຄໍາ ແກ້ວພິລາ ແຂວງສາລະວັນ (2); ຮອງຊະນະເລີດ ໄດ້ແກ່: ນາງ ໝີ່ໝີ່ ວົງສະຫວັດ ບໍລິສັດພອນສະຫວັນ (2); ອັນດັບ III ຮ່ວມ ໄດ້ແກ່: ນາງ ອາລີ ແສງຈັນເພັດ ແຂວງວຽງຈັນ (1) ແລະ ນາງ ໂບລີວັດ ເທບພະກັນ ກະຊວງປ້ອງກັນຄວາມສະຫງົບ.

3. ຄູ່ຊາຍ ທົ່ວໄປ ຊະນະເລີດ ໄດ້ແກ່: ທ່ານ ບຸນຕາມີ ສຸທໍາມະວົງ+ທ້າວ ວິລະສັກ ລາດສະວົງ ແຂວງວຽງຈັນ (2); ຮອງຊະນະເລີດ ໄດ້ແກ່: ທ້າວ ພຸດທະລາ ແກ້ວກັນນິກາ+ທ້າວ ຕຶ່ງຊົ້ນ ແກ້ວກັນນິກາ ກະເພາະປາດົງໝ້ຽງ; ອັນດັບທີ III ໄດ້ແກ່: ທ້າວ ເທບເທວາ ຈິດປັນຍາ+ທ້າວ ວົງພະຈັນ ລັດຕະນະດວງຈິດ ແຂວງຄໍາມ່ວນ ແລະ ທ້າວ ແກ້ວ ອຸດອນ ພະກອນຄໍາ+ທ້າວ ດາວັນ ຫລວງລາດ ກະຊວງໂຍທາທິການ ແລະ ຂົນສົ່ງ.

4. ຄູ່ຍິງ ທົ່ວໄປ ຊະນະເລີດ ໄດ້ແກ່: ນາງ ມະນີວັນ ສຸລິຍາ+ນາງ ໝີ່ໝີ່ ວົງສະຫວັດ ບໍລິສັດ ພອນສະຫວັນ; ຮອງຊະນະເລີດ ໄດ້ແກ່: ຣຕ. ນາງ ລິນດາ ແກ້ວບໍລະກົດ+ວທ. ນາງ ໂບລີວັດ ເທບພະກັນກະຊວງປ້ອງກັນຄວາມສະຫງົບ (1); ຮອງອັນດັບ III ຮ່ວມ ໄດ້ແກ່: ນາງ ນ້ອຍ ມະນີທອນ+ນາງ ມຸກດາວອນ ເທບພະສຸວັນ ສະຖາບັນກິລາກາຍຍະກໍາ ສີເກີດ ແລະ ນາງ ສົມມະລາ ຟົມໄມຈັນ+ນາງ ຄອນສະຫວັນ ພະຈັນທາ ແຂວງຄໍາມ່ວນ (4).

ໃນຕອນທ້າຍ, ທ່ານ ຄໍາຫລ້າ ວິໄລທອງ ປະທານສະຫະພັນກິລາເປຕັງແຫ່ງຊາດລາວ ໄດ້ສະແດງຄວາມຮູ້ບຸນຄຸນ ຕໍ່ທ່ານ ຄໍາໃບ ດໍາລັດ ທີ່ໄດ້ເສຍສະຫລະເວລາອັນມີຄ່າເຂົ້າຮ່ວມເປັນປະທານພິທີ ຂໍອວຍພອນໄຊອັນປະເສີດ ແດ່ທ່ານຈົ່ງມີສຸຂະພະລານາໄມສົມບູນແຂງແຮງ ອວຍພອນໃຫ້ບັນດາການນໍາທຸກຂັ້ນ, ທຸກຂະແໜງການໃນທົ່ວປະເທດ ຕະຫລອດເຖິງຄະນະນໍາ, ຄູເຝິກ ແລະ ນັກກິລາ, ບັນດາຜູ້ອຸປະຖໍາ ພ້ອມດ້ວຍມວນຊົນທີ່ເຂົ້າຮ່ວມໃນຄັ້ງນີ້ ຈົ່ງມີສຸຂະພາບແຂງແຮງ ປະກອບສ່ວນໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເພື່ອພ້ອມກັນກ້າວຂຶ້ນທຽບທັນບັນດາປະເທດໃນອາຊຽນ.

(ອານຸສອນ ພູມມີທອນ)



## ເຜີຍແຜ່...

(ສພຊ) ເພື່ອຈັດຕັ້ງຜັນຂະຫຍາຍຜົນສໍາເລັດຂອງກອງປະຊຸມຍົກສູງບົດບາດການເຄື່ອນໄຫວຂອງສະພາແຫ່ງຊາດ ໃຫ້ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ; ເພື່ອຊຸກຍູ້, ປຸກລະດົມ ການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ລັດຖະທໍາມະນູນ, ກົດໝາຍ, ນິຕິກໍາໃຕ້ກົດໝາຍ ຕິດພັນກັບການເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II ໃຫ້ແກ່ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕໍາຫລວດ ຢູ່ບັນດາວິທະຍາຄານ, ໂຮງຮຽນ ແລະ ກົມກອງຮາກຖານເພື່ອໃຫ້ຮັບຮູ້ເຂົ້າໃຈແລະເປັນເອກະພາບໃນການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ທັງເພື່ອຕິດຕາມກວດກາ ແລະ ປະເມີນຜົນການປະຕິບັດໜ້າທີ່ການເມືອງ ຂອງກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ບັນດາກົມກອງຮາກຖານ.

ໃນວັນທີ 14-15 ພະຈິກ 2022, ກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ນໍາໂດຍທ່ານ ພົຈວ. ສົມວັນ ທໍາມາໄຊ ຮອງປະທານກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະ ກັບກໍາລັງປ້ອງກັນຊາດ ຢູ່ໂຮງຮຽນທິດສະດີການເມືອງກອງທັບ ເພື່ອຕິດຕາມກວດກາ ແລະ ປະເມີນຜົນການປະຕິບັດໜ້າທີ່ການເມືອງ ຂອງກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ບັນດາກົມກອງຮາກຖານ ພ້ອມທັງຊຸກຍູ້, ປຸກລະດົມການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ລັດຖະທໍາມະນູນ, ກົດໝາຍ, ນິຕິກໍາໃຕ້ກົດໝາຍ ຕິດພັນກັບການເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II. ເຂົ້າຮ່ວມມີທ່ານ ພົຈວ. ປອ. ຄໍາຜາຍ ສະພັງເໜືອ ຫົວໜ້າການເມືອງໂຮງຮຽນທິດສະດີການເມືອງກອງທັບ, ພ້ອມດ້ວຍນາຍ ແລະ ພົນທະຫານພາຍໃນໂຮງຮຽນທິດສະດີການເມືອງກອງທັບ ເຂົ້າຮ່ວມຢ່າງພ້ອມພຽງ.

ເອກະສານທີ່ນໍາມາເຜີຍແຜ່ຄັ້ງນີ້ ປະກອບມີ: ບົດກ່ຽວກັບທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II; ເອກະສານກ່ຽວກັບສະພາບຄວາມເປັນມາ, ທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ; ການປະຕິບັດນະໂຍບາຍຕໍ່ພະນັກງານ-ນັກຮົບ ໃນກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປະຕິບັດໜ້າທີ່ຢູ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ຈາກນັ້ນ, ຄະນະ ຍັງໄດ້ສືບຕໍ່ເຄື່ອນໄຫວພົບປະ ຢູ່ວິທະຍາຄານພະລາທິການກອງທັບ (ນໍ້າຫຸມ) ເຂົ້າຮ່ວມມີທ່ານ ພັອ. ບຸນກ້ຽງ ວົງສາລາດ ຫົວໜ້າການເມືອງວິທະຍາຄານພະລາທິການກອງທັບ ພ້ອມດ້ວຍນາຍ ແລະ ພົນທະຫານ ຕື່ມອີກ.

(ກົງທະນູຄໍາ ພິພັດເສລີ)

## ກອງປະຊຸມ...

ຊະອານາຈັກກໍາປູເຈຍ.

ກ່ອນການເຂົ້າຮ່ວມກອງປະຊຸມພົບປະລະຫວ່າງຜູ້ນໍາໄອປາ ແລະ ອາຊຽນ ຄັ້ງນີ້, ຄະນະຜູ້ແທນຈາກສະມາຊິກໄອປາ ທີ່ນໍາໂດຍຂັ້ນປະທານ, ຮອງປະທານ ແລະ ສະມາຊິກສະພາແຫ່ງຊາດ ຈາກ 8 ປະເທດ ຄື: ບຣູໄນ, ກໍາປູເຈຍ, ອິນໂດເນເຊຍ, ລາວ, ຫວຽດນາມ, ສິງກາໂປ, ຟີລິບປິນ ແລະ ໄທ ພ້ອມດ້ວຍເລຂາທິການໃຫຍ່ໄອປາ ໄດ້ມີກອງປະຊຸມປຶກສາຫາລື ແລະ ກະກຽມເນື້ອໃນສານຂອງຜູ້ນໍາໄອປາ ເຖິງຜູ້ນໍາອາຊຽນ. ໃນກອງປະຊຸມດັ່ງກ່າວ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ຫົວໜ້າຄະນະຜູ້ແທນລາວ ໄດ້ແລກປ່ຽນຄໍາຄິດຄໍາເຫັນຕໍ່ຮ່າງສານຂອງຜູ້ນໍາໄອປາທີ່ຈະສະເໜີໃນກອງປະຊຸມພົບປະລະຫວ່າງຜູ້ນໍາໄອປາ ແລະ ອາຊຽນ ໂດຍທ່ານໄດ້ເນັ້ນເພີ່ມເຖິງການເສີມສ້າງການເຊື່ອມຈອດດ້ານຄົມມະນາຄົມ ແລະ ການເຊື່ອມໂຍງດ້ານໂລຈິສຕິກໃນພາກພື້ນອາຊຽນ.




ໃນກອງປະຊຸມພົບປະກັນນັ້ນ, ຜູ້ນໍາໄອປາ ແລະ ຜູ້ນໍາອາຊຽນ, ບັນດານາຍົກລັດຖະມົນຕີ, ປະທານສະພາແຫ່ງຊາດ, ຄະນະຜູ້ແທນຂອງລັດຖະບານ ແລະ ສະພາແຫ່ງຊາດ ຈາກປະເທດສະມາຊິກອາຊຽນ ພ້ອມດ້ວຍເລຂາທິການໃຫຍ່ອາຊຽນ ແລະ ເລຂາທິການໃຫຍ່ໄອປາໄດ້ປຶກສາຫາລືຫລາຍບັນຫາທີ່ສໍາຄັນທີ່ເປັນສິ່ງທ້າທ້າຍແລະມີຄວາມກັງວົນຮ່ວມກັນຂອງພາກພື້ນ ແລະ ຂອງໂລກ. ຜູ້ນໍາໄອປາໄດ້ສະແດງຄວາມຊົມເຊີຍຕໍ່ຜູ້ນໍາອາຊຽນ ໃນການຮ່ວມມືກັນຈັດຕັ້ງປະຕິບັດໜ້າທີ່ວຽກງານ, ເຮັດໃຫ້ອາຊຽນມີສະຖຽນລະພາບ, ມີການເຕີບໃຫຍ່ເຂັ້ມແຂງ, ສາມາດຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ລວມໄປເຖິງການຮັບມືກັບການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້ເປັນຢ່າງດີ; ພ້ອມກັນນັ້ນ, ຍັງໄດ້ສະເໜີໃຫ້ຜູ້ນໍາອາຊຽນ ສົ່ງເສີມການພັດທະນາທີ່ຖືເອົາປະຊາຊົນເປັນໃຈກາງ ແລະ ຮັບປະກັນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງປີ 2030; ໃຫ້ຄວາມສໍາຄັນຕໍ່ການນໍາໃຊ້ພະລັງງານສະອາດ ແລະ ການລົງທຶນທີ່ເປັນມິດຕໍ່ສິ່ງແວດລ້ອມ; ຍົກລະດັບການຮ່ວມມືໃນພາກພື້ນອາຊຽນ ໃນການຮັບມືກັບບັນຫາສຸກເສີນຕ່າງໆ; ສົ່ງເສີມການຮ່ວມມື, ການເຊື່ອມໂຍງເຊື່ອມຈອດ, ສົ່ງເສີມສັນຕິພາບ ແລະ ຄວາມໝັ້ນຄົງໃນພາກພື້ນ ເພື່ອເຮັດໃຫ້ເກີດຄວາມຍືນຍົງ ແລະ ຈະເລີນຮຸ່ງເຮືອງໃນອາຊຽນ. ໃນໂອກາດດຽວກັນ, ຜູ້ນໍາອາຊຽນກໍໄດ້ສະແດງຄວາມຊົມເຊີຍຕໍ່ການປະຕິບັດພາລະບົດບາດ ແລະ ໜ້າທີ່ ຂອງຜູ້ນໍາບັນດາສະມາຊິກໄອປາ ໃນການຊຸກຍູ້ສົ່ງເສີມວຽກງານຕ່າງໆຂອງອາຊຽນ ໂດຍສະເພາະແມ່ນການປະຕິບັດໜ້າທີ່ທາງດ້ານນິຕິບັນຍັດ ເພື່ອຊຸກຍູ້ການຈັດຕັ້ງປະຕິບັດບັນດາຂໍ້ລິເລີ່ມຕ່າງໆຂອງອາຊຽນ; ພ້ອມດຽວກັນນັ້ນ, ຜູ້ນໍາອາຊຽນ ໄດ້ຮັບເອົາຂໍ້ສະເໜີຂອງຜູ້ນໍາໄອປາ ໂດຍຈະສືບຕໍ່ສົ່ງເສີມການຮ່ວມມື ແລະ ປະສານງານກັນຢ່າງໃກ້ຊິດ ລະຫວ່າງລັດຖະບານ ແລະ ລັດຖະບານ, ລັດຖະບານ ແລະ ລັດຖະສະພາ ຂອງບັນດາປະເທດສະມາຊິກອາຊຽນ ລວມໄປເຖິງຄູ່ຮ່ວມເຈລະຈາ ເພື່ອຄວາມຈະເລີນຮຸ່ງເຮືອງ ແລະ ວັດຖະນາຖາວອນຂອງອາຊຽນໃນຕໍ່ໜ້າ.

ນອກຈາກນັ້ນ, ທາງເຈົ້າພາບຍັງໄດ້ຈັດໃຫ້ຄະນະຜູ້ແທນສະພາແຫ່ງຊາດລາວ ໄປຢ້ຽມຢາມພື້ນຖານເສດຖະກິດທີ່ທ່າເຮືອສີຫານຸວິວ ເຊິ່ງເປັນທ່າເຮືອທີ່ໃຫຍ່ ແລະ ເປັນຈຸດບໍລິການສົ່ງອອກ-ນໍາເຂົ້າ ສິນຄ້າຈາກທົ່ວໂລກ.



## ຮອງເລຂາທິການ...

ເພື່ອຜົນປະໂຫຍດຂອງປະຊາຊົນສອງຊາດ, ເພື່ອພາລະກິດສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ໃນພາກພື້ນ ແລະ ໃນໂລກ ພ້ອມທັງແລກປ່ຽນຄໍາຄິດຄໍາເຫັນນໍາກັນກ່ຽວກັບການເປັນເສນາທິການຮັບໃຊ້ໃຫ້ແກ່ສະພາແຫ່ງຊາດ ແລະ ປຶກສາຫາລືທິດທາງແຜນການພົວພັນຮ່ວມມື ລະຫວ່າງ ສອງອົງການນິຕິບັນຍັດ ຂອງສອງປະເທດໃນຕໍ່ໜ້າ.

ໃນຕອນທ້າຍ, ທ່ານ Paul Grove ໄດ້ກ່າວສະແດງຄວາມຂອບໃຈ ຕໍ່ການຕ້ອນຮັບອັນອົບອຸ່ນຂອງສະພາແຫ່ງຊາດລາວ ພ້ອມທັງຢືນຢັນຈະສືບຕໍ່ໃຫ້ການສະໜັບສະໜູນສະພາແຫ່ງຊາດລາວໃນຕໍ່ໜ້າ ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບອັນດີງາມ ລະຫວ່າງ ສອງປະເທດ ກໍຄືສອງອົງການນິຕິບັນຍັດ ສ. ອາເມລິກາ ແລະ ສປປລາວ ໃຫ້ໄດ້ຮັບໝາກຜົນຂຶ້ນເລື້ອຍໆ.

# ຕິດຕາມກວດກາວຽກງານຂົງເຂດຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ສານປະຊາຊົນ ເຂດ III



(ສພຊ) ວັນທີ 10 ພະຈິກ 2022 ນຳພາໂດຍທ່ານ ບຸນທານ ພຸດທະວົງສາ ຮອງປະທານສະພາປະຊາຊົນນະຄອນຫລວງວຽງຈັນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢູ່ສານປະຊາຊົນ ເຂດ III ນະຄອນຫລວງວຽງຈັນ ໂດຍການຕ້ອນຮັບຂອງທ່ານ ສົມສະຫວາດ ກົມໄຊຊະນະ ປະທານສານປະຊາຊົນ ເຂດ III ແລະ ຮອງເຈົ້າເມືອງ ເມືອງສີສັດຕະນາກ, ຮອງເຈົ້າເມືອງຈັນທະບູລີ, ຄະນະນຳໄອຍະການປະຊາຊົນ ເຂດ III, ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງສີສັດຕະນາກ, ເມືອງຈັນທະບູລີ, ຄະນະນຳຫ້ອງການຍຸຕິທຳ ເມືອງສີສັດຕະນາກ ແລະ ເມືອງຈັນທະບູລີ ພະນັກງານກ່ຽວຂ້ອງຈຳນວນໜຶ່ງເຂົ້າຮ່ວມ.

ໃນການເຄື່ອນໄຫວຄັ້ງນີ້, ໄດ້ຮັບຟັງການລາຍງານຈາກພາກສ່ວນທີ່ກ່ຽວຂ້ອງ 8 ພາກສ່ວນຄື: ສານປະຊາຊົນ ເຂດ III, ອົງການໄອຍະການປະຊາຊົນ ເຂດ III, ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງສີສັດຕະນາກ, ເມືອງຈັນທະບູລີ; ຫ້ອງການຍຸຕິທຳ ແລະ ຫ້ອງວ່າການ ເມືອງສີສັດຕະນາກ, ເມືອງຈັນທະບູລີ ໃນນັ້ນ, ທ່ານ ສົມສະຫວາດ ກົມໄຊຊະນະ ປະທານ ໄດ້ລາຍງານໃຫ້ຮູ້ວ່າ: ໃນໄລຍະຜ່ານມາ ສານປະຊາຊົນເຂດ III ແມ່ນໄດ້ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 27 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປີ 2017 ກໍຄືການພິຈາລະນາຄະດີເປັນຂັ້ນຕົ້ນໃນຄະດີທີ່ເກີດຂຶ້ນຢູ່ 2 ເມືອງຄື: ເມືອງສີສັດຕະນາກ ແລະ ເມືອງຈັນທະບູລີ ເຊິ່ງໃນໄລຍະຕົ້ນປີ 2022 ເຖິງປັດຈຸບັນມີຄະດີທັງໝົດ 278 ເລື່ອງ, ສາມາດພິຈາລະນາຕັດສິນໄດ້ 128 ເລື່ອງ ເທົ່າກັບ 66,5%. ພາຍຫລັງຮັບຟັງການລາຍງານຂອງພາກສ່ວນຕ່າງໆ ບັນດາທ່ານຜູ້ເຂົ້າຮ່ວມ ໄດ້ມີຄຳເຫັນແລກປ່ຽນເຊິ່ງກັນແລະກັນ ເພື່ອຊອກຫາວິທີແກ້ໄຂບັນດາຂໍ້ຄົງຄ້າງໃນການປະຕິບັດວຽກງານຂອງແຕ່ລະຂົງເຂດ ໃນໄລຍະຜ່ານມາ.

ໃນໂອກາດດັ່ງກ່າວ, ທ່ານ ບຸນທານ ພຸດທະວົງສາ ໄດ້ມີຄຳເຫັນຊຸກຍູ້ໃຫ້ແຕ່ລະພາກສ່ວນເອົາໃຈໃສ່ຕື່ມຕໍ່ການຈັດຕັ້ງປະຕິບັດໜ້າທີ່ວິຊາສະເພາະຂອງຕົນ ໂດຍສຸມໃສ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດຕາມຄວາມຮັບຜິດຊອບຢ່າງເຂັ້ມງວດ ໂດຍອີງໃສ່ຂໍ້ຕົກລົງສະບັບເລກທີ 841/ຈນວ, ລົງວັນທີ 25 ຕຸລາ 2021 ທັງສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄະນະນຳຂອງແຕ່ລະຂົງເຂດວຽກງານທີ່ໄດ້ຕັ້ງໜ້າປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບສູງ ແລະ ເນັ້ນໃຫ້ແຕ່ລະພາກສ່ວນສືບຕໍ່ເອົາໃຈໃສ່ປະຕິບັດບັນດາຄາດໝາຍ ແລະ ທິດທາງໃນຕໍ່ໜ້າທີ່ກຳນົດໄວ້ໃນແຜນການເຄື່ອນໄຫວໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

(ນັກຂ່າວ ສປນວ)



# ຮອງປະທານ ສພຂ ຫລວງພະບາງ ພົບປະຜູ້ມີສິດເລືອກຕັ້ງ



(ສພຊ) ໃນວັນທີ 8 ພະຈິກ 2022 ທ່ານ ສົມພອນ ສີອຸດົມພັນ ຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 6, ຮອງປະທານສະພາປະຊາຊົນແຂວງຫລວງພະບາງ, ປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຕາມຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ແລະ ຄະນະປະຈຳສະພາປະຊາຊົນແຂວງ ຢູ່ຫ້ອງປະຊຸມໃຫຍ່ຂອງທະນາຄານແຫ່ງ ສປປລາວ ສາຂາພາກເໜືອ ແຂວງຫລວງພະບາງ; ເຂົ້າຮ່ວມໂດຍທ່ານ ນາງ ໂພທິຈັນ ທຳມະເທວາ ຫົວໜ້າທະນາຄານແຫ່ງ ສປປລາວ ສາຂາພາກເໜືອ ແຂວງຫລວງພະບາງ, ມີບັນດາທ່ານທີ່ຕາງໜ້າໃຫ້ແກ່ທະນາຄານທຸລະກິດ ພາຍໃນແຂວງຫລວງພະບາງ ແລະ ພະນັກງານຂອງທະນາຄານແຫ່ງ ສປປລາວ ສາຂາພາກເໜືອ ແຂວງຫລວງພະບາງ ເຂົ້າຮ່ວມຮັບຟັງ.

ການເຄື່ອນໄຫວວຽກງານຄັ້ງນີ້, ໄດ້ຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດວຽກງານຂອງທະນາຄານ ແຫ່ງ ສປປລາວ ພາຍໃນແຂວງຫລວງພະບາງ ໃນໄລຍະຜ່ານມາ. ຫລັງຈາກນັ້ນ, ຈຶ່ງໄດ້ຮັບຟັງການໂອ້ລົມຈາກທ່ານ ສົມພອນ ສີອຸດົມພັນ ເຊິ່ງໄດ້ນຳເອົາເນື້ອໃນຈິດໃຈຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ມາເຜີຍແຜ່ໃຫ້ບັນດາທ່ານ ໄດ້ຮັບຮູ້ ແລະ ເຂົ້າໃຈທົ່ວເຖິງກັນ; ພ້ອມກັນນັ້ນ, ກໍຍັງໄດ້ຮັບຟັງການປະກອບຄຳເຫັນຂອງບັນດາທ່ານ ເຊິ່ງໄດ້ຕິດພັນກັບວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ.

ໂອກາດດັ່ງກ່າວ, ຍັງໄດ້ມີພິທີເຊັນບົດບັນທຶກການປະສານງານລະຫວ່າງຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນກັບທະນາຄານ ແຫ່ງ ສປປລາວ ສາຂາພາກເໜືອ ແຂວງຫລວງພະບາງ ເພື່ອເປັນພື້ນຖານ, ບ່ອນອີງ ແລະ ເປັນໃຈກາງການປະສານງານ, ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານ ໃຫ້ມີປະສິດທິພາບ, ປະສິດທິຜົນ, ວ່ອງໄວ ແລະ ຮັດກຸມຂຶ້ນກວ່າເກົ່າ ເຊິ່ງຕາງໜ້າລົງລາຍເຊັນໃນບົດບັນທຶກໂດຍທ່ານ ສົມພອນ ສີອຸດົມພັນ ໃນນາມປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ແລະ ທ່ານ ນາງ ໂພທິຈັນ ທຳມະເທວາ ໃນນາມຫົວໜ້າທະນາຄານແຫ່ງ ສປປລາວ ສາຂາພາກເໜືອ ແຂວງຫລວງພະບາງ; ມີບັນດາທ່ານທີ່ຕາງໜ້າທະນາຄານທຸລະກິດ ພາຍໃນແຂວງຫລວງພະບາງ ຮ່ວມເປັນສັກຂີພິຍານ.

(ສຸດາກອນ ໂພສະຫວັດ)

# ກອງປະຊຸມວຽກງານຄະນະເລຂາທິການຂອງ ສພຂ ຊຽງຂວາງ



(ສພຊ) ວັນທີ 1 ພະຈິກ 2022 ຢູ່ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງຊຽງຂວາງ ໄດ້ມີການດຳເນີນກອງປະຊຸມວຽກງານຄະນະເລຂາທິການຂອງສະພາປະຊາຊົນແຂວງ ພາຍໃຕ້ການເປັນປະທານຂອງທ່ານ ນາງ ສາຍພູເງິນ ອຸດົມສຸກ ເລຂາທິການສະພາປະຊາຊົນແຂວງ; ເຂົ້າຮ່ວມມີບັນດາທ່ານຮອງເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານສະພາປະຊາຊົນແຂວງ.

ການເປີດກອງປະຊຸມຄັ້ງນີ້ ແມ່ນເພື່ອຜ່ານບົດສະຫລຸບການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງ ປະຈຳ 9 ເດືອນ ແລະ ທິດທາງແຜນການປະຈຳ 3 ເດືອນ ປີ 2022 ແລະ ປຶກສາຫາລື, ປັບປຸງວຽກງານພາຍໃນສະພາປະຊາຊົນແຂວງ ແລະ ວຽກງານປົ່ນອ້ອມອື່ນໆ ເປັນຕົ້ນແມ່ນການເປັນເສນາທິການໃຫ້ການນຳ, ຂອດປະສານງານລະຫວ່າງຄະນະເລຂາທິການກັບບັນດາຂະແໜງການຂອງສະພາປະຊາຊົນແຂວງ, ວຽກງານການຈໍລະຈອນເອກະສານ, ວຽກປ້ອງກັນເວນຍາມສະພາປະຊາຊົນແຂວງ, ວຽກງານອະນາໄມຕຶກສະພາປະຊາຊົນແຂວງ ແລະ ວຽກງານອື່ນອີກຈຳນວນໜຶ່ງທີ່ປົ່ນອ້ອມໃນຄະນະເລຂາທິການ.

ໃນຕອນທ້າຍ, ທ່ານ ນາງ ສາຍພູເງິນ ອຸດົມສຸກ ໄດ້ມີຄຳເຫັນໂອ້ລົມຕໍ່ກັບພະນັກງານສະພາປະຊາຊົນແຂວງ ຈົ່ງສືບຕໍ່ຊອກຄົ້ນຄວ້າຮ່ຳຮຽນວຽກງານຕ່າງໆ ເພື່ອສາມາດນຳເຂົ້າໃນການຈັດຕັ້ງປະຕິບັດວຽກງານຕົວຈິງໃຫ້ດີຂຶ້ນກວ່າເກົ່າ, ເອົາໃຈໃສ່ປະຕິບັດພາລະບົດຂອງຕົນຢ່າງຕັ້ງໜ້າ ແລະ ຈົ່ງຮັກສາຄວາມສາມັກຄີພາຍໃນໃຫ້ແໜ້ນແຟ້ນກວ່າເກົ່າ.

(ນາງ ສຸກສະຫ້ອນ ອິນທະແສງ)

# ລົງນາມບົດບັນທຶກກຳນົດກົນໄກປະສານງານ ກ່ຽວກັບການດຳເນີນຄະດີຕາມຂະບວນການຍຸຕິທຳ



(ສພຊ) ວັນທີ 7 ພະຈິກ 2022 ທີ່ອົງການໄອຍະການແຂວງຄຳມ່ວນ ໄດ້ຈັດພິທີລົງນາມບົດບັນທຶກຮ່ວມວ່າດ້ວຍການກຳນົດກົນໄກປະສານງານກ່ຽວກັບການດຳເນີນຄະດີຕາມຂະບວນການຍຸຕິທຳ, ລະຫວ່າງອົງການໄອຍະການປະຊາຊົນແຂວງກັບກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ພະແນກກະສິກຳ-ປ່າໄມ້, ສານປະຊາຊົນ ແລະ ພະແນກຍຸຕິທຳແຂວງ ໂດຍການເຂົ້າຮ່ວມຂອງທ່ານ ບຸນມີ ພິມມະສອນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຄຳມ່ວນ, ມີບັນດາຫົວໜ້າ-ຮອງຫົວໜ້າພະແນກການ ທັງ 4 ພາກສ່ວນດັ່ງກ່າວ ຕະຫລອດຮອດພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນພິທີ, ບັນດາທ່ານທີ່ເຂົ້າຮ່ວມໄດ້ຮັບຟັງການຜ່ານຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະປະສານງານຮ່ວມ ສະບັບເລກທີ 230, 244, 245 ແລະ 246 ລະຫວ່າງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ, ພະແນກຍຸຕິທຳ, ພະແນກກະສິກຳ-ປ່າໄມ້, ປກສ ໂດຍໄດ້ກຳນົດພາລະບາດ ແລະ ສິດໜ້າທີ່ ລວມທັງມາດຕະການຕ່າງໆຕາມຂະບວນຍຸຕິທຳ, ພ້ອມນັ້ນ, ຍັງໄດ້ຮັບຟັງການຜ່ານຮ່າງບົດບັນທຶກຮ່ວມລະຫວ່າງອົງການໄອຍະການປະຊາຊົນແຂວງກັບ 4 ພາກສ່ວນ, ເພື່ອໃຫ້ບັນດາພະແນກການທີ່ກ່ຽວຂ້ອງໄດ້ປະກອບຄຳຄິດຄຳເຫັນ ແລະ ມີຄວາມເປັນເອກະພາບທາງດ້ານເນື້ອໃນ ບົນພື້ນຖານຖືກຕ້ອງຄອດຄ່ອງຕາມລະບຽບຫລັກການ ແລະ ກົດໝາຍທີ່ກຳນົດໄວ້, ແນໃສ່ສະກັດກັ້ນປາກົດການຫຍໍ້ທໍ້ໃນສັງຄົມ ເຮັດໃຫ້ການດຳເນີນຄະດີຂອງແຕ່ລະພາກສ່ວນໄດ້ດຳເນີນໄປຢ່າງຖືກຕ້ອງ, ໂປ່ງໃສ, ວ່ອງໄວ, ທັນຕາມກຳນົດເວລາ ແລະ ຍຸຕິທຳ.

ໃນໂອກາດນີ້, ຫົວໜ້າອົງການໄອຍະການປະຊາຊົນແຂວງຄຳມ່ວນ ແລະ ບັນດາຕາງໜ້າພະແນກການທັງ 4 ພາກສ່ວນ ກໍໄດ້ລົງນາມບົດບັນທຶກຮ່ວມກັນເພື່ອເປັນບ່ອນອີງ ແລະ ພ້ອມກັນນຳໄປຈັດຕັ້ງຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງ ໃຫ້ມີປະສິດທິຜົນສູງ.

ໃນພິທີດັ່ງກ່າວ, ຍັງໄດ້ຮັບຟັງການມີຄຳເຫັນໂອ້ລົມ ແລະ ໃຫ້ທິດຊີ້ນຳຂອງທ່ານ ບຸນມີ ພິມມະສອນ ໂດຍທ່ານເນັ້ນໜັກມາຍັງບັນດາຄະນະພັກ, ຄະນະນຳທັງ 4 ພາກສ່ວນ ຈົ່ງນຳເອົາເນື້ອໃນບົດບັນທຶກຄັ້ງນີ້ ໄປຈັດຕັ້ງເຜີຍແຜ່, ເຊື່ອມຊຶມໃຫ້ຖັນແຖວພະນັກງານຕົນຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມເອກະພາບກັນໃນການປະຕິບັດໜ້າທີ່ວຽກງານໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ, ເອົາໃຈໃສ່ປັບປຸງຂອດປະສານງານຮ່ວມໃຫ້ເປັນລະບົບ, ເພີ່ມທະວີໂຄສະນາເຜີຍແຜ່ລະບຽບກົດໝາຍໃຫ້ແກ່ຖັນແຖວພະນັກງານໃນຂົງເຂດທີ່ຕົນຮັບຜິດຊອບໃຫ້ທົ່ວເຖິງ, ໄປຄຽງຄູ່ກັບການບຳລຸງກໍ່ສ້າງຍົກລະດັບພະນັກງານໂດຍສະເພາະເຈົ້າໜ້າທີ່ ທີ່ເຮັດວຽກຕົວຈິງ ໃຫ້ມີຄວາມຮູ້, ຄວາມສາມາດສູງ, ມີຄຸນທາດການເມືອງ, ຄຸນສົມບັດ, ຈັນຍາທຳ ແລະ ຄວາມໂປ່ງໃສ ຮັບໃຊ້ປະຊາຊົນຢ່າງແທ້ຈິງ.

(ນັກຂ່າວ ສພຂ ຄຳມ່ວນ)

# ປະທານສະພາປະຊາຊົນນະຄອນຫລວງວຽງຈັນ ເຄື່ອນໄຫວວຽກງານ



(ສພຊ) ວັນທີ 10 ພະຈິກ 2022 ນຳພາໂດຍທ່ານ ອານຸພາບ ຕຸນາລົມ ປະທານສະພາປະຊາຊົນນະຄອນຫລວງວຽງຈັນ ແລະ ທ່ານ ນາງ ສົມພຽນ ວົງໄຊ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນນະຄອນຫລວງວຽງຈັນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢູ່ສານປະຊາຊົນ ເຂດ II ນະຄອນຫລວງວຽງຈັນ ໂດຍການຕ້ອນຮັບຂອງທ່ານ ສັກກຸນາ ຍະພິຈິດ ປະທານສານປະຊາຊົນ ເຂດ II ແລະ ມີພະນັກງານຈຳນວນໜຶ່ງເຂົ້າຮ່ວມ.

ໃນການເຄື່ອນໄຫວເຮັດວຽກດັ່ງກ່າວ, ໄດ້ຮັບຟັງການລາຍງານ ເຊິ່ງໃນໄລຍະຕົ້ນປີ 2022 ເຖິງປັດຈຸບັນ, ສານປະຊາຊົນເຂດ II ໄດ້ຍົກສູງຄຸນນະພາບໃນການດຳເນີນຄະດີຕາມຂະບວນການຍຸຕິທຳຕາມ ມະຕິ 112/ກມສພ ຂອງກົມການເມືອງສູນກາງພັກ ເຊິ່ງໃນໄລຍະ 9 ເດືອນຜ່ານມາ ສາມາດແກ້ໄຂຄະດີໄດ້ທັງໝົດ 270 ເລື່ອງ ໃນຈຳນວນ 358 ເລື່ອງ ເທົ່າກັບ 75%, ໄດ້ເອົາໃຈໃສ່ປັບປຸງກົນໄກການບໍລິຫານຄະດີພາຍໃນ ໂດຍຄະດີທີ່ເຂົ້າມາບໍ່ໃຫ້ມີຫລາຍຂັ້ນຕອນ ແລະ ແກ່ຍາວເວລາຢູ່ພາຍໃນຫລາຍ, ສ້າງສິ່ງອຳນວຍຄວາມສະດວກ, ສະພາບແວດລ້ອມທີ່ດີ ເປັນຕົ້ນແມ່ນຫ້ອງຄົ້ນຄວ້າຄະດີ, ຫ້ອງສອບສວນລູກຄວາມ, ຫ້ອງຕັດສິນຄະດີ ໃຫ້ມີຄວາມພ້ອມຕະຫລອດເວລາ, ໄດ້ເຜີຍແຜ່ວຽກງານຂອງສານປະຊາຊົນຕໍ່ການຈັດຕັ້ງທຸກພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນກຸ່ມ ແລະ ບ້ານ ຕາມໂຄງການທີ່ເມືອງໄຊທານີໄດ້ຮັບຮອງ ໂດຍລົງເຄື່ອນໄຫວເນັ້ນ 4 ຈຸດປະສົງໃຫຍ່ ຄື: ເຜີຍແຜ່ທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່ຂອງສານປະຊາຊົນ ແລະ ສານປະຊາຊົນເຂດ; ຍົກບັນດາຄະດີຄວາມທີ່ມັກເກີດຂຶ້ນ ເຊັ່ນ ທີ່ດິນ, ໜີ້ສິນ, ຢ່າຮ້າງ, ລັກຊັບ, ຊີງຊັບ, ປຸ້ນຈີ້, ອຸບັດເຫດ ແລະ ບັນຫາຢາເສບຕິດ; ແລກປ່ຽນສົນທະນາວິທີແກ້ໄຂບັນຫາຕ່າງໆ; ສັງລວມບັນຫາ, ກຳນົດຈຸດການມີສ່ວນຮ່ວມ ແລະ ຂອດການປະສານງານກັນ ເຊິ່ງໄດ້ສຳເລັດແລ້ວ 6 ກຸ່ມ ແລະ 53 ບ້ານ.

ໃນໂອກາດດັ່ງກ່າວ, ບັນດາທ່ານຜູ້ເຂົ້າຮ່ວມ ກໍໄດ້ມີຄຳເຫັນແລກປ່ຽນເຊິ່ງກັນແລະກັນ ເພື່ອຊອກຫາວິທີແກ້ໄຂບັນດາຂໍ້ຄົງຄ້າງໃນການປະຕິບັດວຽກງານຂອງສານປະຊາຊົນເຂດ II ໃນໄລຍະຜ່ານມາ ແລະ ໃນຕອນທ້າຍ ທ່ານ ອານຸພາບ ຕຸນາລົມ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄະນະນຳຂອງສານປະຊາຊົນເຂດ II ທີ່ໄດ້ຕັ້ງໜ້າປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບສູງ ແລະ ເນັ້ນໃຫ້ສານປະຊາຊົນເຂດ II ເອົາໃຈໃສ່ປະຕິບັດບັນດາຄາດໝາຍ ແລະ ທິດທາງໃນຕໍ່ໜ້າທີ່ກຳນົດໄວ້ໃຫ້ໄດ້ຮັບຜົນສຳເລັດຕາມແຜນການທີ່ວາງໄວ້.

(ນັກຂ່າວ ສປນວ)

# ການເຄື່ອນໄຫວວຽກງານຂອງ ສພຂ ອຸດົມໄຊ



(ສພຊ) ຕອນເຊົ້າວັນອັງຄານທີ 8 ພະຈິກ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ, ກຳມະບານຮາກຖານສະພາປະຊາຊົນແຂວງ ໄດ້ດຳເນີນຊີວິດປະຈຳເດືອນ 10 ປີ 2022 ໂດຍການເປັນປະທານຂອງສະຫາຍ ນາງ ຄຳພອນ ພິມມະຈັນ ຄະນະບໍລິຫານງານສະຫະພັນກຳມະບານແຂວງ, ປະທານກຳມະບານຮາກຖານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳ, ຄະນະກຳມະບານ ແລະ ສະຫາຍສະມາຊິກກຳມະບານພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ການດຳເນີນຊີວິດຄັ້ງນີ້, ໄດ້ຮັບຟັງການຜ່ານຮ່າງບົດສະຫລຸບຕີລາຄາການເຄື່ອນໄຫວວຽກງານປະຈຳເດືອນ 10 ແລະ ທິດທາງແຜນການປະຈຳເດືອນ 11 ປີ 2022 ຂອງກຳມະບານຮາກຖານສະພາປະຊາຊົນແຂວງ ເຊິ່ງຕະຫລອດໄລຍະ 1 ເດືອນຜ່ານມາ ກຳມະບານຮາກຖານສະພາປະຊາຊົນແຂວງ ໄດ້ຖືເອົາການສຶກສາອົບຮົມດ້ານການເມືອງ-ແນວຄິດເປັນບັນຫາກົກ ເພື່ອເຮັດໃຫ້ສະມາຊິກກຳມະບານມີແນວຄິດອຸ່ນອ່ຽນໝຸ່ນທ່ຽງ, ມີຄວາມສາມັກຄີພາຍໃນ-ພາຍນອກໃຫ້ແໜ້ນແຟ້ນ, ຊ່ວຍເຫລືອເຊິ່ງກັນແລະກັນ, ມີຄວາມຫ້າວຫັນປະຕິບັດໜ້າທີ່ວຽກງານວິຊາສະເພາະສຳເລັດຜົນຕາມລະດັບຄາດໝາຍ ແລະ ໄດ້ຮັບຟັງທາງຄະນະຮັບຜິດຊອບຜ່ານຮ່າງບົດປະເມີນ 5 ເປັນເຈົ້າຂອງກຳມະບານຮາກຖານສະພາປະຊາຊົນແຂວງ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023. ຫລັງຈາກນັ້ນ, ບັນດາທ່ານສະມາຊິກກຳມະບານໄດ້ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ຕໍ່ຮ່າງບົດສະຫລຸບ ແລະ ບົດປະເມີນດັ່ງກ່າວ ເພື່ອເຮັດໃຫ້ມີເນື້ອໃນຄົບຖ້ວນ, ສົມບູນ ແລະ ຖືກຕ້ອງຕາມສະພາບການເຄື່ອນໄຫວຕົວຈິງໃນແຕ່ລະໄລຍະ ຂອງກຳມະບານຮາກຖານ ສະພາປະຊາຊົນແຂວງ.

ໃນຕອນທ້າຍ, ປະທານສະຫະພັນກຳມະບານຮາກຖານສະພາປະຊາຊົນແຂວງ ໄດ້ມີຄຳເຫັນສະຫລຸບ ແລະ ສັງລວມບັນດາຄຳຄິດເຫັນຕ່າງໆ ພ້ອມທັງມີຄຳເຫັນເນັ້ນໜັກໃຫ້ແຕ່ລະສະຫາຍ ຈົ່ງເພີ່ມທະວີໃນການເຊື່ອມຊຶມບັນດານິຕິກຳ, ມີແນວຄິດຫລັກໝັ້ນ, ອຸ່ນອ່ຽນໝຸ່ນທ່ຽງ, ເຊື່ອໝັ້ນຕໍ່ແນວທາງຂອງພັກ-ລັດ, ເຊື່ອໝັ້ນຕໍ່ການນຳພາຂອງກົມກອງ, ເພີ່ມທະວີຄວາມສາມັກຄີພາຍໃນເປັນຈິດໜຶ່ງໃຈດຽວ, ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານວິຊາສະເພາະທີ່ຕົນຮັບຜິດຊອບ ໃຫ້ມີຜົນສຳເລັດດີຂຶ້ນກວ່າເກົ່າ.

ກ່ອນໜ້ານີ້, ໃນວັນພຸດທີ 2 ພະຈິກ 2022 ຢູ່ທີ່ສະພາປະຊາຊົນແຂວງອຸດົມໄຊ ຍັງໄດ້ປະເມີນຜົນງານການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ຂອງພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງ ໂດຍການເຂົ້າຮ່ວມຂອງບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ ຜູ້ຊີ້ນຳຂະແໜງຊ່ວຍພາຍໃນສະພາປະຊາຊົນແຂວງ, ມີຄະນະເລຂາທິການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມ.

ການປະເມີນໄດ້ແບ່ງອອກເປັນ 2 ກຸ່ມຄື: ກຸ່ມ1 ຊີ້ນຳໂດຍທ່ານ ນາງ ວັນສີ ພວງມະໄລ ເລຂາທິການສະພາປະຊາຊົນແຂວງ, ຜູ້ຊີ້ນຳຂະແໜງຊ່ວຍວຽກຄະນະເລຂາທິການ ເຊິ່ງປະກອບມີ 4 ຂະແໜງຄື: ຂະແໜງຄົ້ນຄວ້າສັງລວມ, ຂໍ້ມູນຂ່າວສານ, ຂະແໜງບໍລິຫານ-ການເງິນ, ຂະແໜງຈັດຕັ້ງ-ກວດກາ ແລະ ຂະແໜງຊ່ວຍວຽກສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງເຂົ້າຮ່ວມ. ກຸ່ມ 2 ຊີ້ນຳໂດຍທ່ານ ທອງຄານ ວັດສະດາກອນ ຜູ້ຊີ້ນຳຂະແໜງຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ມີຜູ້ຊີ້ນຳຂະແໜງວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ຜູ້ຊີ້ນຳຂະແໜງເສດຖະກິດ, ແຜນການ ແລະ ການເງິນ ປະກອບມີ 3 ຂະແໜງການເຂົ້າຮ່ວມຢ່າງພ້ອມ.

ກອງປະຊຸມຄັ້ງນີ້, ພະນັກງານ-ລັດຖະກອນ ໄດ້ຜ່ານບົດປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງຕົນ 1 ປີ 2022 ກ່ຽວກັບຜົນສຳເລັດໃນໜ້າທີ່ວຽກງານ, ຂໍ້ຄົງຄ້າງ, ວິທີແກ້ໄຂ ແລະ ມີຄຳຄິດເຫັນສະເໜີຕໍ່ຄະນະຊີ້ນຳ ແລະ ເພື່ອນຮ່ວມງານ. ພ້ອມນັ້ນ, ໄດ້ມີການປະກອບຄຳຄິດຄຳເຫັນເຊິ່ງກັນແລະກັນ ຢ່າງກົງໄປກົງມາ ເພື່ອເປັນການກໍ່ສ້າງ, ຕັກເຕືອນ, ຕຳນິສິ່ງຂ່າວ ເຮັດໃຫ້ຜູ້ກ່ຽວເຫັນໄດ້ຈຸດອ່ອນ, ຂໍ້ຄົງຄ້າງຕ່າງໆ ແລະ ນຳໄປປັບປຸງຕົນເອງໃຫ້ດີຂຶ້ນກວ່າເກົ່າໃນປີຕໍ່ໆໄປ.

(ແສງພອນ ອິນນະລົງ)

# ພິທີປະກາດອະນຸມັດໃຫ້ພະນັກງານຮັບອຸດໜູນບຳນານ



(ສພຊ) ໂດຍປະຕິບັດຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015 (ໝວດທີ 5, ມາດຕາ 70) ແລະ ມະຕິຕົກລົງວ່າດ້ວຍການອະນຸມັດໃຫ້ພະນັກງານພັກຜ່ອນກ່ອນມື້ຮັບອຸດໜູນບຳນານ ສະບັບເລກທີ 1241/ຄປພຂ.ອຊ, ລົງວັນທີ 18 ຕຸລາ 2022.

ຕອນບ່າຍຂອງວັນທີ 11 ພະຈິກ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ໄດ້ຈັດພິທີປະກາດອະນຸມັດໃຫ້ພະນັກງານພັກຜ່ອນຮັບອຸດໜູນບຳນານ ຢູ່ສະພາປະຊາຊົນແຂວງອຸດົມໄຊ ພາຍໃຕ້ການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການ, ພະແນກພາຍໃນແຂວງ, ຄະນະຈັດຕັ້ງແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ແຂກເຊີນ ແລະ ພະນັກງານພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນພິທີ, ໄດ້ຜ່ານມະຕິຕົກລົງວ່າດ້ວຍການອະນຸມັດໃຫ້ພະນັກງານພັກຜ່ອນກ່ອນຮັບມື້ຮັບອຸດໜູນບຳນານ. ຈາກນັ້ນ, ທ່ານ ຄຳພວງ ເດດກົງພົນ ອະດີດຮອງເລຂາທິການສະພາປະຊາຊົນແຂວງອຸດົມໄຊ ໄດ້ລາຍງານໂດຍສັງເຂບ ກ່ຽວກັບການຈັດຕັ້ງປະຕິບັດວຽກງານທີ່ຕົນຮັບຊອບ ເຊິ່ງຕະຫລອດໄລຍະຜ່ານມາ ທ່ານໄດ້ເອົາໃຈໃສ່ສຸມສະຕິປັນຍາ ຈັດຕັ້ງປະຕິບັດໜ້າທີ່, ນຳພາ-ຊີ້ນຳວຽກງານດ້ານວິຊາສະເພາະພາຍໃນສະພາປະຊາຊົນແຂວງ ມີຜົນສຳເລັດຫລາຍດ້ານ. ພ້ອມນັ້ນ, ຍັງໄດ້ມອບວຽກງານທີ່ຕົນຮັບຜິດຊອບຄືນ ໃຫ້ຄະນະເລຂາທິການສະພາປະຊາຊົນແຂວງ ສືບຕໍ່ຈັດຕັ້ງປະຕິບັດຕໍ່ໄປ.

ຕອນທ້າຍ, ທ່ານ ຄຳດີ ວົງລ້ອມ ໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມຕໍ່ອະດີດທ່ານຮອງເລຂາທິການ ເປັນຜູ້ໜຶ່ງທີ່ມີແນວຄິດຫລັກໝັ້ນ, ມີຄວາມຮູ້ຄວາມສາມາດ, ປະສົບການບົດຮຽນຫລາຍດ້ານ ແລະ ໄດ້ສຳເລັດພາລະກິດວຽກງານອັນສຳຄັນຫລາຍດ້ານຢູ່ສະພາປະຊາຊົນແຂວງອຸດົມໄຊ. ໃນໂອກາດດັ່ງກ່າວ, ທ່ານຍັງໄດ້ເນັ້ນບາງບັນຫາວ່າ ພະນັກງານ-ລັດຖະກອນເມື່ອຮອດອາຍຸກະສຽນ ກໍຕ້ອງຮັບອຸດໜູນບຳນານ ເຊິ່ງເປັນກົດເກນຂອງໝົດທຸກຄົນ; ວຽກງານພັກ-ພະນັກງານ ແມ່ນວຽກງານທີ່ສຳຄັນເພາະພະນັກງານຈະເປັນຜູ້ຕັດສິນຜົນໄດ້ຜົນເສຍ, ໝາກຜົນສຳເລັດຂອງວຽກງານ; ມອບໃຫ້ຄະນະຈັດຕັ້ງແຂວງ, ພະແນກພາຍໃນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າພະນັກງານທີ່ມີເງື່ອນໄຂມອບຮັບອຸດໜູນບຳນານ ຢູ່ຂັ້ນເມືອງ-ຂັ້ນແຂວງ; ພາຍຫລັງມອບ-ຮັບໜ້າທີ່ ໃຫ້ຄະນະປະຈຳສະພາ, ຄະນະເລຂາທິການ ພົວພັນກັບພະແນກພາຍໃນແຂວງ ສົມທົບກັບຄະນະປັບປຸງກົງຈັກການຕັ້ງຂັ້ນແຂວງ ເພື່ອຄົ້ນຄວ້າເປົ້າໝາຍປ່ຽນແທນຮອງເລຂາທິການຄົນໃໝ່ ແລະ ຂໍໃຫ້ອະດີດຮອງເລຂາທິການສືບຕໍ່ປະຕິບັດໜ້າທີ່ຢູ່ຂັ້ນບ້ານ ເປັນທີ່ປຶກສາ, ຊ່ວຍພັດທະນາບ້ານ ແລະ ສ້າງເສດຖະກິດຄອບຄົວຕາມເງື່ອນໄຂ.

(ສີແຫວງ ສີບຸນເຮືອງ)

# ສຳເລັດການປະເມີນຜົນການປະຕິບັດວຽກງານ ພະນັກງານ-ລັດຖະກອນ ປະຈຳປີ 2022



(ສພຊ) ໃນລະຫວ່າງວັນທີ 31 ຕຸລາ-4 ພະຈິກ 2022 ສະພາປະຊາຊົນແຂວງວຽງຈັນ ໄດ້ດຳເນີນກອງປະຊຸມປະເມີນຜົນງານປະຕິບັດວຽກງານພະນັກງານ-ລັດຖະກອນ ປະຈຳປີ 2022 ໂດຍການເປັນປະທານຂອງທ່ານ ທອງສະຫ້ວນ ວົງສຳພັນ ຮອງເລຂາພັກແຂວງ, ຜູ້ຮັບຜິດຊອບວຽກພັກ, ພະນັກງານ; ມີຮອງປະທານສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ເລຂາທິການ-ຮອງເລຂາທິການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການ ແລະ ຄະນະຮັບຜິດຊອບການປະເມີນຂັ້ນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ກໍເພື່ອເປັນການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ໃນການປະຕິບັດໜ້າທີ່ວຽກງານ ໃນໄລຍະ 1 ປີຜ່ານມາ ຕີລາຄາ ແລະ ປະເມີນຜົນຕາມມາດຖານວັດແທກການປະເມີນ ແລະ ຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານຂອງພະນັກງານ-ລັດຖະກອນ ຢ່າງເປັນລະບົບ ແລະ ຕໍ່ເນື່ອງ.

ພ້ອມດຽວກັນນີ້, ກອງປະຊຸມຍັງໄດ້ເຊື່ອມຊຶມເອກະສານສຳຄັນ ເປັນຕົ້ນແມ່ນດຳລັດວ່າດ້ວຍການປະເມີນຜົນການຈັດຕັ້ງປະຕິບັດຂອງພະນັກງານ-ລັດຖະກອນ ສະບັບເລກທີ 300/ລບ ລົງວັນທີ 13 ກັນຍາ 2017 ແລະ ຄຳແນະນຳການຈັດຕັ້ງປະຕິບັດດຳລັດວ່າດ້ວຍການປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ເລກທີ 06/ພນ, ລົງວັນທີ 2 ພຶດສະພາ 2022.

(ນັກຂ່າວ ສພຂ ວຽງຈັນ)

108 ສາລະ

# ວັນຄູ ຂອງບັນດາປະເທດໃນອາຊຽນ

ໂດຍ: ສາວແອ່ນ



ວັນຄູ ເປັນມື້ສຳຄັນອີກມື້ໜຶ່ງ ເພື່ອລະນຶກເຖິງຄວາມສຳຄັນຂອງຄູ ໃນຖານະເປັນຜູ້ເສຍສະຫລະຕົນເອງ ເພື່ອຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນ ເຊິ່ງການສະເຫລີມສະຫລອງວັນຄູ ຂອງແຕ່ລະປະເທດໃນໂລກນັ້ນລ້ວນແຕ່ມີຄວາມແຕກຕ່າງກັນ ແຕ່ທັງນີ້ກໍລ້ວນແຕ່ເປັນການລະນຶກເຖິງຄຸນງາມຄວາມດີຂອງຄູ.

ວັນຄູໂລກ ໄດ້ຖືກກຳນົດເອົາວັນທີ 5 ຕຸລາ 1994 ເປັນຕົ້ນມາ ໃນກອງປະຊຸມສຳມະນາການສຶກສານາໆຊາດ ຂອງອົງການຢູແນັດສະໂກ ໃນປີ 1994 ເພື່ອປະກາດຍ້ອງຍໍສັນລະເສີນຄູ ໃຫ້ເປັນບຸກຄົນສຳຄັນໃນການສົ່ງເສີມການສຶກສາ ໃຫ້ມີຄວາມຈະເລີນກ້າວໜ້າ ແລະ ເປັນຜູ້ປູກຝັງຈິດສຳນຶກທີ່ດີໃນການຊ່ວຍເຫລືອເພື່ອນມະນຸດ; ແນວຄິດເລື່ອງການສະເຫລີມສະຫລອງວັນຄູ ມີຕົ້ນກຳເນີດຈາກຫລາຍປະເທດ ໃນສັດຕະວັດທີ XX ສ່ວນຫລາຍຈະສະເຫລີມສະຫລອງໃຫ້ແກ່ຜູ້ທີ່ໃຫ້ການສຶກສາ ຫລືຈັດໃນວັນທີ່ມີເຫດການສຳຄັນທາງການສຶກສາ.

ສຳລັບບັນດາປະເທດໃນ AEC ຫລື ບັນດາກຸ່ມປະເທດອາຊຽນ ການຈັດງານວັນຄູຂອງແຕ່ລະປະເທດມີຄວາມແຕກຕ່າງກັນ ຄື: ປະເທດໄທ ໄດ້ກຳນົດເອົາວັນທີ 16 ມັງກອນ ໂດຍເລີ່ມສະເຫລີມສະຫລອງໃນປີ 1975 ເປັນຕົ້ນມາ; ວັນຄູຂອງມາເລເຊຍ ຫລື ຮຽກອີກຊື່ໜຶ່ງ "ວັນຫາຣີກູຣູ" ຄືວັນທີ 16 ພຶດສະພາ ຂອງທຸກປີ ເພື່ອລະນຶກເຖິງວັນທີ່ສະພາແຫ່ງຊາດ ໄດ້ມີມະຕິຮັບຮອງເອົາບົດລາຍງານກ່ຽວກັບການສຶກສາຂອງປະເທດ; ປະເທດສິງກະໂປກຳນົດເອົາວັນທີ 1 ກັນຍາຂອງທຸກປີ ເປັນວັນຄູ ແຕ່ຕໍ່ມາປ່ຽນມາກຳນົດໃຫ້ວັນສຸກ ມື້ສຸດທ້າຍຂອງເທີມທີ 3 ເປັນວັນຄູ; ປະເທດຟີລິບປິນມີການສະເຫລີມສະຫລອງຍາວທີ່ສຸດໃນອາຊຽນ ແລະ ຍາວນານທີ່ສຸດໃນໂລກ ຄື ຕັ້ງແຕ່ວັນທີ 5 ກັນຍາ ເຖິງ 5 ຕຸລາຂອງທຸກປີ; ປະເທດຈີນຈະເລືອກເອົາວັນເກີດ ຂອງທ່ານຂົງຈື້ ຄື ວັນທີ 28 ກັນຍາ ເປັນວັນຄູ; ສ່ວນປະເທດບຣູໄນ ກຳນົດໃຫ້ວັນທີ 23 ກັນຍາ ຂອງທຸກປີເປັນວັນຄູ ເພື່ອລະນຶກເຖິງ ຊີວິດສຸລະຕານໂອມານ ອາລີໄຊຟຸດດີ ທີ 3 ທີ່ນຳສະເໜີນະໂຍບາຍການຮຽນລ້າ ໂດຍບໍ່ໄດ້ເສຍຄ່າໃຫ້ແກ່ປະຊາຊົນ; ສ່ວນປະເທດມຽນມາ ແລະ ກຳປູເຈຍ ໄດ້ເລືອກເອົາວັນທີ 5 ຕຸລາ ເປັນວັນຄູສາກົນ ຕາມການກຳນົດຂອງອົງການຢູແນັດສະໂກ; ປະເທດຫວຽດນາມ ໄດ້ກຳນົດເອົາວັນທີ 20 ພະຈິກ ເປັນວັນຄູແຫ່ງຊາດ ສ່ວນປະເທດທີ່ຈັດການສະເຫລີມຫລອງວັນຄູຊ້າສຸດ ຄື ປະເທດອິນໂດເນເຊຍ ເຊິ່ງກຳນົດໃຫ້ເປັນວັນຄູ ແມ່ນມື້ດຽວກັນກັບວັນສ້າງຕັ້ງສະມາຄົມຄູອິນໂດເນເຊຍ ເຊິ່ງແມ່ນວັນທີ 25 ພະຈິກຂອງທຸກປີ; ສ່ວນ ສປປລາວ ໄດ້ກຳນົດເອົາວັນທີ 7 ຕຸລາ 1994 ເປັນຕົ້ນມາ ເປັນວັນຄູແຫ່ງຊາດ ເພື່ອລະນຶກເຖິງຄຸນງາມຄວາມດີຂອງນາຍຄູຄຳ.

ສາລາກະວີ

## ຍອມຮັບຜິດເພື່ອແກ້ໄຂຈຸດອ່ອນ

# ໂດຍ: ລູກທາດສາມປາງ

❊ ຄົນເຮົາມັກໝູ່ຍ້ອງ        ຍໍຍື່ນສັນລະເສີນ
ເກີນວ່າມີຄວາມສຸກ        ອີ່ມເຕັມເຂົາຍ້ອງ
ຈິດຜ່ອງໃສອິ່ມຍິ້ມ        ພໍໃຈໜ້າຊື່ນ
ລື້ນລື່ນຫລົງເພິ່ນຍ້ອງ        ສຸກລ້ຳມ່ວນໃຈ ວ່ານາ!

❊ ໃຜກໍມັກແຕ່ຍ້ອງ        ຄົນອື່ນຊົມເຊີຍ
ເບີຍເບີກບານຍາມຍໍ        ເມື່ອເຂົາຊູທ້າຍ
ສ່ວນຫລາຍຄົນເຮົານັ້ນ        ສະເໜີກັນໂດຍດັ່ງ
ປິດບັງຄວາມຊົ່ວໄວ້        ໄຂເວົ້າແຕ່ເລື່ອງດີ

❊ ຄັນຕຳນິເພິ່ນແຄ້ນ        ເຄືອງຄັ່ງມະໂນໃນ
ໃຈຈ່ອງເວນຊັງເຂົາ        ໝູ່ຕິຫືນຮ້າຍ
ຄວາມຜິດຫລາຍຝັງຊ້ອນ        ຂັງໃນອົມເຊື່ອງ
ຈຸດອ່ອນອຳເລື່ອງດ້ອຍ
ເຂົານຳຮອຍລໍ່າພໍ້າ        ເຕືອນແລ້ວບໍ່ຮັບຟັງ

❊ ສັງບໍ່ຍອມໝູ່ເວົ້າ        ຈຸດອ່ອນຂອງຕົນ
ຄົນອື່ນເຂົາຕິຕຽນ        ວ່າເຮົາຜິດພັ້ງ
ຍັງສຽງແຂງຖຽງຖ້ອຍ        ເຄືອງກັນຄຽດຄັ່ງ
ຄວາມຜິດຕົນອັ່ງແອ້ມ        ແຖມຮ້າຍໃສ່ເຂົາ ບໍ່ດີດາຍ

❊ ຍອມຮັບຜິດແມ່ເຈົ້າ        ຍາມເພິ່ນມອງເຫັນ
ຍອມເພື່ອເປັນແນວທາງ        ປ່ຽນແປງຄວາມດ້ອຍ
ເຈົ້າຢ່າຄອຍຄົນຍ້ອງ        ສັນເສີນດີເດັ່ນ
ໃດຊິເຫັນບ່ອນເປື້ອນ        ຄົນອື່ນແນມເບິ່ງໃຫ້
ເພື່ອນຳໄປປ່ຽນແກ້        ຕົນນັ້ນບ່ອນເສຍ ທ່ານເອີຍ!



ສຸກສະບາຍຫາຍໂລດ

# 5 ວິທີຖະໜອມສາຍຕາ

ແປ ແລະ ຮຽບຮຽງໂດຍ: ທິວກະທິ

ປັດຈຸບັນ, ຄົນສ່ວນຫລາຍຈະຈົດຈໍ່ຢູ່ກັບຄອມພິວເຕີ, ແທັບເລັດ, ໃຊ້ໂທລະສັບສະມາດໂຟນ ຈຶ່ງກໍ່ໃຫ້ເກີດບັນຫາກ່ຽວກັບຕາເຊັ່ນ: ເຈັບຕາ, ຕາມົວ, ຕາແຫ້ງ, ຕາໂປ ລວມທັງອາການເຈັບຫົວ, ເຈັບຫລັງ, ເຈັບຄໍ, ເຈັບບ່າ ແລະ ອື່ນໆ. ເພື່ອຫລີກລ່ຽງບັນຫາຕ່າງໆທີ່ກ່າວມານັ້ນ ໃນຄໍລຳສຸກບາຍຫາຍໂລຄາສະບັບນີ້ ເຮົາມີວິທີຖະໜອມສາຍຕາ ມານຳສະເໜີແກ່ທ່ານຜູ້ອ່ານ ເຊິ່ງມີຂັ້ນຕອນດັ່ງຕໍ່ໄປນີ້:

1. ຫລັບຕາເລື້ອຍໆ ເພື່ອຫລຸດຜ່ອນອາການຕາແຫ້ງ ຫລື ໃຊ້ນ້ຳຕາປອມຢອດໃສ່ຕາເພື່ອຊ່ວຍເພີ່ມຄວາມຊຸ່ມຊື່ນໃຫ້ແກ່ໜ່ວຍຕາ.

2. ການຈັດວາງຄອມພິວເຕີໃຫ້ເໝາະສົມໂດຍໃຫ້ມີແສງສະຫວ່າງທີ່ພຽງພໍ ເພື່ອຈະຊ່ວຍຫລຸດຜ່ອນການສະທ້ອນໃນໜ້າຈໍ; ພ້ອມນັ້ນ, ຕ້ອງຕັ້ງລະດັບຈໍພາບຈາກຈຸດສູນກາງຂອງຈໍໃຫ້ຢູ່ຕ່ຳກວ່າລະດັບສາຍຕາ ປະມານ 4-9 ນິ້ວ ຫລື ຕ່ຳກວ່າລະດັບສາຍຕາ ແລະ ໜ້າຈໍກໍບໍ່ຄວນສູງເກີນໄປ ຫລື ຕ່ຳເກີນໄປ.

3. ເລືອກໃຊ້ຕົວອັກສອນຂະໜາດໃຫຍ່ໃນເວລາພິມເອກະສານຕ່າງໆ ແລະ ປັບຄວາມເຂັ້ມຂອງຕົວອັກສອນໃຫ້ເຂັ້ມຂຶ້ນ.

4. ເລືອກແວ່ນຕາທີ່ເໝາະສົມກັບຄອມພິວເຕີ ທີ່ຜະລິດເພື່ອກັ່ນຕອງແສງຈາກໜ້າຈໍໂດຍສະເພາະແລະໃຊ້ເລນສີຂຽວອ່ອນ ເພື່ອຊ່ວຍຜ່ອນຄາຍສາຍຕາ ແລະ ຫລຸດແສງສະທ້ອນຈາກຈໍອີກດ້ວຍ.

5. ພັກຜ່ອນສາຍຕາທຸກໆຊົ່ວໂມງ ໂດຍການປ່ຽນທ່າທາງ ຫລື ລຸກຂຶ້ນ ບິດໂຕໄປ-ມາ ເພື່ອພັກຜ່ອນສາຍຕາ ແລະ ປ້ອງກັນອາການປວດເມື່ອຍຈາກການໃຊ້ຄອມພິວເຕີເປັນເວລາດົນ.

ຂໍ້ມູນ: www.nationtv.tv



# ກົດໝາຍວ່າດ້ວຍການສຳຫຼວດວັດແທກ ແລະ ສ້າງແຜນທີ່

ຕໍ່ຈາກສະບັບກ່ອນ...

**ມາດຕາ 56 ລິຂະສິດ ກ່ຽວກັບຂໍ້ມູນ ແລະ ຜະລິດຕະພັນສຳຫຼວດວັດແທກ ແລະ ສ້າງແຜນທີ່**

ຂໍ້ມູນ ແລະ ຜະລິດຕະພັນສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໃຊ້ງົບປະມານຂອງລັດ ຫຼື ໄດ້ຮັບການຊ່ວຍເຫຼືອລ້າ ຈາກຕ່າງປະເທດ, ພາກພື້ນ ແລະ ສາກົນ ຕ້ອງເປັນລິຂະສິດຂອງລັດ.

ລິຂະສິດ ກ່ຽວກັບຂໍ້ມູນ ແລະ ຜະລິດຕະພັນການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍຊັບສິນທາງປັນຍາ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ໝວດທີ 3
### ການຄຸ້ມຄອງໂຄງລ່າງພື້ນຖານສຳຫຼວດວັດແທກ

**ມາດຕາ 57 ໂຄງລ່າງພື້ນຖານສຳຫຼວດວັດແທກ**

ໂຄງລ່າງພື້ນຖານສຳຫຼວດວັດແທກ ມີ ດັ່ງນີ້:

1. ໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ;
2. ໂຄງລ່າງພື້ນຖານສຳຫຼວດວັດແທກວຽກສະເພາະ.

**ມາດຕາ 58 ໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ**

ໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ ແມ່ນ ໂຄງລ່າງພື້ນຖານສຳຫຼວດວັດແທກ ແລະ ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງແຫ່ງຊາດ ທີ່ສ້າງຂຶ້ນຢູ່ຈຸດໃດໜຶ່ງ ເທິງພື້ນຜິວໂລກທີ່ແນ່ນອນ ເພື່ອກຳນົດຕາໜ່າງສຳຫຼວດວັດແທກພື້ນຖານແຫ່ງຊາດ ຢ່າງເປັນລະບົບ ແລະ ເອກະພາບ ໃນຂອບເຂດທົ່ວປະເທດ.

**ມາດຕາ 59 ໂຄງລ່າງພື້ນຖານສຳຫຼວດວັດແທກວຽກສະເພາະ**

ໂຄງລ່າງພື້ນຖານສຳຫຼວດວັດແທກວຽກສະເພາະ ແມ່ນ ໂຄງລ່າງພື້ນຖານສຳຫຼວດວັດແທກ ແລະ ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງ ວຽກສະເພາະ ທີ່ສ້າງຂຶ້ນຢູ່ຈຸດໃດໜຶ່ງ ເທິງພື້ນຜິວໂລກທີ່ແນ່ນອນ ເພື່ອນຳໃຊ້ເຂົ້າໃນວຽກງານສະເພາະໃດໜຶ່ງ ຊຶ່ງຕ້ອງນຳໃຊ້ຂໍ້ມູນເຄົ້າການສຳຫຼວດວັດແທກພື້ນຖານແຫ່ງຊາດ ແລະ ປະຕິບັດ ຕາມມາດຕະຖານເຕັກນິກແຫ່ງຊາດ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 60 ການຄຸ້ມຄອງໂຄງລ່າງພື້ນຖານສຳຫຼວດວັດແທກ**

ການຄຸ້ມຄອງໂຄງລ່າງພື້ນຖານສຳຫຼວດວັດແທກ ມີ ດັ່ງນີ້:

1. ການສ້າງໂຄງລ່າງພື້ນຖານການສຳຫຼວດວັດແທກ;
2. ການນຳໃຊ້ໂຄງລ່າງພື້ນຖານສຳຫຼວດວັດແທກ;
3. ການປົກປັກຮັກສາໂຄງລ່າງພື້ນຖານສຳຫຼວດວັດແທກ.

**ມາດຕາ 61 ການສ້າງໂຄງລ່າງພື້ນຖານສຳຫຼວດວັດແທກ**

ລັດຖະບານ ເປັນຜູ້ກຳນົດການສ້າງໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ ແລະ ການນຳໃຊ້ທີ່ດິນ ສຳລັບການສ້າງໂຄງລ່າງພື້ນຖານດັ່ງກ່າວ ຕາມການສະເໜີຂອງກະຊວງພາຍໃນ ເພື່ອນຳສະເໜີຄະນະປະຈຳສະພາແຫ່ງຊາດ ພິຈາລະນາ.

ກະຊວງພາຍໃນ ເປັນຜູ້ຮັບຜິດຊອບສ້າງໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ ພາຍຫຼັງຄະນະປະຈຳສະພາແຫ່ງຊາດ ພິຈາລະນາຮັບຮອງ.

ການສ້າງໂຄງລ່າງພື້ນຖານສຳຫຼວດວັດແທກວຽກສະເພາະ ຕ້ອງປະສານສົມທົບ ແລະ ເປັນເອກະພາບກັບ ກະຊວງພາຍໃນ ແລະ ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 59 ຂອງກົດໝາຍສະບັບນີ້.

**ມາດຕາ 62 ການນຳໃຊ້ໂຄງລ່າງພື້ນຖານສຳຫຼວດວັດແທກ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນຳໃຊ້ໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ ຕ້ອງໄດ້ຂໍອະນຸຍາດນຳກະຊວງພາຍໃນ ແລະ ຕ້ອງລາຍງານພະແນກພາຍໃນ ແຂວງ, ນະຄອນຫຼວງ ຫຼື ຫ້ອງ ການພາຍໃນ ເມືອງ, ເທດສະບານ, ນະຄອນ ບ່ອນໂຄງລ່າງພື້ນຖານຕັ້ງຢູ່ ກ່ອນນຳໃຊ້ ພ້ອມທັງຮັບປະກັນບໍ່ໃຫ້ໂຄງລ່າງພື້ນຖານທີ່ຕົນນຳໃຊ້ນັ້ນເປ່ເພ ແລະ ເສຍຫາຍ ຕະຫຼອດໄລຍະເວລານຳໃຊ້.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ໂຄງລ່າງພື້ນຖານສຳຫຼວດວັດແທກວຽກສະເພາະທີ່ຕົນສ້າງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍມີການປະສານສົມທົບກັບ ກະ ຊວງພາຍໃນ.

ຜູ້ມີສິດນຳໃຊ້ທີ່ດິນ ບ່ອນໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ ແລະ ວຽກສະເພາະ ຕັ້ງຢູ່ ຕ້ອງອຳນວຍຄວາມສະດວກໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ນຳໃຊ້ໂຄງລ່າງພື້ນຖານດັ່ງກ່າວ.

**ມາດຕາ 63 ການປົກປັກຮັກສາໂຄງລ່າງພື້ນຖານສຳຫຼວດວັດແທກ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພັນທະ ປົກປັກຮັກສາໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ ແລະ ວຽກສະເພາະ. ໃນກໍລະນີພົບເຫັນໂຄງລ່າງພື້ນຖານສຳຫຼວດວັດແທກ ດັ່ງກ່າວ ເປ່ເພ, ເສຍຫາຍ, ຖືກທຳລາຍ, ຍົກຍ້າຍ ຫຼື ມີຄວາມສ່ຽງທີ່ຈະພາໃຫ້ມີຄວາມເສຍຫາຍ ຕ້ອງແຈ້ງໃຫ້ອົງການປົກຄອງບ້ານ, ຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ, ພະແນກພາຍໃນແຂວງ, ນະຄອນຫຼວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຢ່າງທັນການ ຕາມແຕ່ລະກໍລະນີ.

ກະຊວງພາຍໃນ ມີ ຄວາມຮັບຜິດຊອບໃນການປົກປັກຮັກສາໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້, ສ່ວນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບໃນການປົກປັກຮັກສາ ໂຄງລ່າງພື້ນຖານສຳຫຼວດວັດແທກວຽກສະເພາະ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

ທີ່ດິນ ທີ່ເປັນບ່ອນຕັ້ງໂຄງລ່າງພື້ນຖານສຳຫຼວດວັດແທກ ແລະ ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງແຫ່ງຊາດ ແລະ ວຽກສະເພາະ ແມ່ນ ທີ່ດິນທີ່ຕ້ອງໄດ້ຮັບການປົກປັກຮັກສາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ, ກົດໝາຍອື່ນ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ໃນກໍລະນີມີຄວາມຈຳເປັນ ຕ້ອງໄດ້ຍົກຍ້າຍໂຄງລ່າງພື້ນຖານສຳຫຼວດວັດແທກ ຫຼື ສະຖານີອ້າງອີງການສຳຫຼວດແບບຕໍ່ເນື່ອງແຫ່ງຊາດບົນພື້ນຖານຄວາມຮຽກຮ້ອງຕ້ອງການໃນການພັດທະນາເສດຖະກິດ-ສັງ ຄົມຂອງຊາດ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕ້ອງໄດ້ຮັບການເຫັນດີຈາກກະຊວງພາຍໃນ ແລະ ຮັບຜິດຊອບໃຊ້ຈ່າຍໃນການກໍ່ສ້າງຄືນໃໝ່ທັງໝົດ, ສ່ວນການຍົກຍ້າຍໂຄງລ່າງພື້ນຖານສຳຫຼວດວັດແທກ ຫຼື ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງວຽກສະເພາະນັ້ນ ກໍຕ້ອງແຈ້ງກະຊວງພາຍໃນ.

ຂັ້ນຕອນການປົກປັກຮັກສາໂຄງລ່າງພື້ນຖານສຳຫຼວດວັດແທກ ແລະ ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງແຫ່ງຊາດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ພາກທີ VI
### ການປະກອບວິຊາຊີບ ແລະ ທຸລະກິດ
### ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່
### ໝວດທີ 1
### ການປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່

**ມາດຕາ 64 ການປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ການປະກອບວິຊາຊີບ ການສຳຫຼວດວັດແທກ ແລະ ສ້າງແຜນທີ່ ແມ່ນການປະກອບອາຊີບຂອງນັກວິຊາການດ້ານການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງໄດ້ຮັບອະນຸຍາດຈາກກະຊວງພາຍໃນ.

ຜູ້ຈະໄດ້ຮັບອະນຸຍາດເປັນຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີປະກາສະນິຍະບັດ ລະດັບວິຊາສະເພາະຊັ້ນສູງຂຶ້ນໄປທີ່ກ່ຽວຂ້ອງກັບວຽກງານການສຳຫຼວດວັດແທກ ແລະ ສ້າງແຜນທີ່;
2. ມີຄວາມຮູ້ທາງດ້ານກົດໝາຍ ແລະ ລະບຽບການ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່;
3. ມີຄວາມຮູ້, ຄວາມສາມາດ ແລະ ປະສົບການ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢ່າງໜ້ອຍ ສາມປີ ຂຶ້ນໄປ;
4. ຜ່ານການສອບເສັງ, ສຳພາດ ແລະ ຝຶກອົບຮົມ ຈາກກະຊວງພາຍໃນ;
5. ມີເງື່ອນໄຂມາດຕະຖານກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
6. ມີເງື່ອນໄຂອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 65 ເອກະສານປະກອບ ກ່ຽວກັບການປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ເອກະສານປະກອບ ກ່ຽວກັບການປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ມີ ດັ່ງນີ້:

1. ຄຳຮ້ອງ ຕາມການກຳນົດຂອງກະຊວງພາຍໃນ;
2. ສຳເນົາຖ່າຍບັດປະຈຳຕົວ;
3. ສຳເນົາຖ່າຍປະກາສະນິຍະບັດ;
4. ໃບຢັ້ງຢືນການຜ່ານງານ ແລະ ປະສົບການກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
5. ໃບແຈ້ງໂທດ;
6. ໃບກວດ ຫຼື ໃບຢັ້ງຢືນ ສຸຂະພາບ;
7. ເອກະສານອື່ນທີ່ກ່ຽວຂ້ອງ.

**ມາດຕາ 66 ການພິຈາລະນາ ກ່ຽວກັບການປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ພາຍຫຼັງໄດ້ຮັບເອກະສານປະກອບ ກ່ຽວກັບການປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ແລ້ວ ກະຊວງພາຍໃນ ຕ້ອງຄົ້ນຄວ້າ ແລະ ພິຈາລະນາ ເອກະສານດັ່ງກ່າວ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບເອກະສານ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

ໃນກໍລະນີເອກະສານ ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ກະຊວງພາຍໃນ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍເປັນລາຍລັກອັກສອນ ເພື່ອປະກອບເອກະສານທີ່ກ່ຽວຂ້ອງຄືນໃໝ່ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບແຈ້ງການ ເປັນຕົ້ນໄປ.

ສຳລັບ ຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ເປັນຄົນຕ່າງປະເທດ ທີ່ມີຈຸດປະສົງປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢູ່ ສປປລາວ ໃຫ້ຂໍອະນຸຍາດເຄື່ອນໄຫວ ນຳກະຊວງພາຍໃນ.

**ມາດຕາ 67 ການເຄື່ອນໄຫວຂອງຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້ຮັບໃບອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ສາມາດເຄື່ອນໄຫວປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕາມຂອບເຂດວິຊາຊີບທີ່ຕົນໄດ້ຮັບອະນຸຍາດ ເທົ່ານັ້ນ.

ສຳລັບ ຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ເປັນຄົນຕ່າງປະເທດ ຊຶ່ງເຄື່ອນໄຫວສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢູ່ ສປປລາວ ຕ້ອງເຄື່ອນໄຫວພາຍໃຕ້ການຕິດຕາມກວດກາ ແລະ ຄຸ້ມຄອງ ຂອງກະຊວງພາຍໃນ.

**ມາດຕາ 68 ການລາຍງານການເຄື່ອນໄຫວສຳຫຼວດວັດແທກ ແລະ ສ້າງແຜນທີ່**

ຜູ້ປະກອບອາຊີບດ້ານການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້

ອ່ານຕໍ່ສະບັບໜ້າ...




## ການຕີຄວາມໝາຍໃນການສ້າງພະທາດຫລວງ

ໂດຍ: ດັ້ນກົບເມກ

ເມື່ອເວົ້າເຖິງພະທາດຫລວງ ມີຜູ້ຕັ້ງບັນຫາອະທິບາຍການສ້າງພະທາດຍັງແບບຄຸມເຄືອ; ຜູ້ຂຽນຂໍມີຄຳເຫັນວ່າ: ການສ້າງພະທາດຫລວງວຽງຈັນອາດມີຫລາຍທັດສະນະແງ່ມູມຂອງຜູ້ສຶກສາຄົ້ນຄວ້າ ອີງຕາມຂໍ້ມູນ ແລະ ສະຕິປັນຍາຂອງແຕ່ລະຄົນ ແຕ່ສ່ວນຕົວເຂົ້າໃຈວ່າ: ການສ້າງພະທາດຫລວງຂອງເຈົ້າໄຊເສດຖານັ້ນ ບໍ່ພຽງແຕ່ຈະມຸ່ງໝາຍໃຫ້ເປັນສັນຍາລັກຂອງຊາດລວມເອົາດວງໃຈສາມັກຄີທົ່ວປະເທດ ແຕ່ມັນຍັງກິນຄວາມໝາຍໃນການນຳເອົາຫລັກສິນທຳໃນສາສະໜາມາສື່ສານ ເພື່ອຢາກໃຫ້ລູກຫລານໄດ້ເຂົ້າໃຈຖືກຕ້ອງ.

ຜູ້ຂຽນຂໍຍົກຕົວຢ່າງ: ວັດຖຸທີ່ຕາເຮົາເບິ່ງເຫັນ ແລະ ເຂົ້າໃຈງ່າຍຄື: ທາດນ້ອຍ 30 ໜ່ວຍອ້ອມທາດໜ່ວຍໃຫຍ່ຢູ່ນັ້ນ ແມ່ນມີຈຸດມຸ່ງໝາຍເພື່ອສື່ສານເຖິງປາລະມີ 30 ຄື ຂະຫຍາຍອອກມາຈາກປາລະມີ 10 ປະການ ເພາະແບ່ງອອກເປັນ 3 ລະດັບຄື: ຕົ້ນ, ກາງ, ປາຍ ເພື່ອໃຫ້ສະດວກແກ່ຜູ້ມີກຳລັງສະຕິປັນຍາ ນຳໄປປະຕິບັດຕ່າງກັນ ໄດ້ສະດວກງ່າຍຂຶ້ນ, ເປັນຫຍັງຈຶ່ງເອົາສີ່ສັນຍາລັກທາງສິນທຳມາເປັນສິ່ງສະແດງອອກອ້ອມທາດອົງໃຫຍ່ ເພາະມີຫລັກການທີ່ເປັນຄຸນນະທຳສອນໄວ້ວ່າຄົນເຮົາຈະກ້າວໄປສູ່ຄວາມສຳເລັດໄດ້ ຍ່ອມຕ້ອງມີ ຫລືປະຕິບັດຜ່ານຄຸນນະທຳດັ່ງກ່າວນັ້ນ.

ປາລະມີ 10 ປະການນັ້ນມີຄື: 1. ທານະປາລະມີ ເປັນແນວທາງຂັ້ນຕົ້ນສອນໃຫ້ມະນຸດກັບມະນຸດ ຮູ້ຈັກໃຫ້ແບ່ງປັນຢູ່ຮ່ວມກັນຢ່າງສັນຕິ, ສອນໃຫ້ໃຈກວ້າງເສຍສະຫລະ; 2. ສີລະປາລະມີ ຄືຄົນເຮົາຈະສຳເລັດ ຫລືໄດ້ຮັບການຍອມຮັບຕ້ອງເປັນຜູ້ຮັກສາລະບຽບກົດໝາຍໄດ້; 3. ເນດທຳມະປາລະມີ ຄືການຮູ້ຈັກການປະຕິບັດໃນການເຊິ່ງແປຕາມໂຕວ່າການອອກຈາກການ; 4. ປັນຍາປາລະມີ ຄືຄົນໃດຈະສຳເລັດເປົ້າໝາຍໄດ້ ຍ່ອມຕ້ອງມີປັນຍາຄວາມຮູ້; 5. ວິຣິຍະປາລະມີ ຄືຕ້ອງມີຄວາມພຽນປະກອບ; 6. ຂັນຕິປາລະມີ ຄືການອົດທົນສູ້ວຽກຕໍ່ສູ້ກັບອຸປະສັກທີ່ເກີດຂຶ້ນ; 7. ສັດຈະປາລະມີ ຄືຄົນຈະບັນລຸວຽກງານຕ້ອງຖືສັດຈະ; 8. ອະທິຖານນະປາລະມີ ຄືການຕັ້ງໃຈໝັ້ນແນ້ວແນ່ຕໍ່ໜ້າທີ່-ອາຊີບ; 9. ເມດຕາປາລະມີ ສອນໃຫ້ໃຈກວ້າງເມດຕາຕໍ່ຄົນອື່ນ; 10. ອຸເບກຂາປາລະມີ ຄືການຊອມເບິ່ງ-ພິຈາລະນາຮອບຄອບດ້ວຍສະຕິປັນຍາ....

ຜູ້ຂຽນນຳມາສະເໜີບາງສ່ວນຂ້າງເທິງນັ້ນ ເພື່ອໃຫ້ຜູ້ອ່ານລອງສຶກສານຳກັນເບິ່ງ ອັນໃດມັນງ່າຍໃຊ້ໄດ້ມີປະໂຫຍດເປັນວິທະຍາສາດ ດີກວ່າຈະໄປງົມຫາຜີຟ້າຜີແຖນ!




## ບໍ່ຕ້ອງຫ່ວງດອກ

**# ໂດຍ: ປ່າວກະປື**

ລູກຊາຍ, ພ້ອມດ້ວຍແມ່ຂອງເຂົາ ແລະ ລູກໃພ້ໃນອະນາຄົດ ພາກັນນັ່ງເຮືອລ່ອງລອຍໃນທ້ອງທະເລ. ທັນໃດນັ້ນ ເກີດມີຄື້ນລົມພັດເຂົ້າມາຈົນເຮືອໂຍກເຍກຄອນແຄນ. ຜູ້ເປັນແມ່ຢາກລອງທົດສອບຄວາມຮັກຂອງລູກຊາຍທີ່ມີຕໍ່ຕົນ. ນາງຖາມລູກຊາຍວ່າ: "ຖ້າເຮືອລຳນີ້ເລີ່ມຈົມລົງພື້ນນ້ຳ ລູກຈະຊ່ວຍຊີວິດໃຜກ່ອນ ຊ່ວຍແມ່ຫຼືວ່າແຟນຂອງລູກ? "ລູກຊາຍຮູ້ສຶກອັດອັ້ນຕັນປັນຍາ ບໍ່ຮູ້ວ່າຊິຕັດສິນໃຈຕອບແນວໃດດີ. ຝ່າຍຜູ້ສາວເວົ້າຂຶ້ນວ່າ :

"ບໍ່ມີບັນຫາດອກທີ່ຮັກ, ໃຫ້ອ້າຍຊ່ວຍແມ່ຂອງອ້າຍຫັ້ນລະກ່ອນໝູ່"

ຜູ້ເປັນແມ່ພໍອົກພໍໃຈນຳຄຳເວົ້າຂອງລູກໃພ້ໃນອະນາຄົດ ລາວເວົ້າວ່າ: "ລູກສາວແມ່, ຈັ່ງແມ່ນຊາດລູກດີ". ຫຼຽວໄປຮອບໆ, ຍິງສາວແນມເຫັນຊຸມຊາຍໜຸ່ມສັກສາຍຕາເບິ່ງຂາອັນຍາວຮຽດໃນໂສ້ງຂາສັ້ນ ແລະ ແຂນອັນເປົ່າແປນຂອງນາງ.

ນາງເວົ້າວ່າ: "ແມ່, ລູກຊາຍແມ່ຕ້ອງຊ່ວຍແມ່ກ່ອນ, ທີ່ນີ້ມີພວກຜູ້ຊາຍຫຼາຍຄົນພໍທີ່ຈະຊ່ວຍຊີວິດລູກໄວ້ໄດ້ຢູ່ດອກ".

## DON'T WORRY

**# By: BAOKBU**

The son, the son's mother and the future daughter in law were in a boat on the sea. All of a sudden, winds picked up and the boat started shaking.

The mother, trying to test the son's loyalty asked him: "If the boat starts sinking, who will you save first, me or your sweet-heart?" The son was in trouble and unable to decide what to say.

The girl said: "No problem honey, you save your mother first".

The mother was very happy with her future daughter in law and said: "Daughter, so nice of you". The girl looked around and saw a bunch of young men looking at her long legs in shorts and her sleeveless arms and said: "Ma, he should save you, there are plenty of guys here waiting to save me".

## ແກ້ຜິດ

ໜັງສືພິມຜູ້ແທນປະຊາຊົນ ສະບັບທີ 890 ປະຈຳວັນທີ 09-12 ພະຈິກ 2022 ໜ້າ 8 ຄໍລຳ ຮຽນພາສາຜ່ານສຽງຫົວ: ASKING FOR HELP ແມ່ນຜິດ, ຖືກແມ່ນ GOOD EXAMPLE; ຂໍໃຫ້ເຂົ້າໃຈຕາມນີ້ດ້ວຍ.

ຂໍອະໄພຢ່າງສູງໃນຄວາມຜິດພາດຄັ້ງນີ້ດ້ວຍ.

ບ.ກ

ທະນາຄານພັດທະນາລາວ
LDB Bank

ທະນາຄານພົງສະຫວັນ
Phongsavanh BANK

ຮ່ວມກັບ
ກົມສື່ມວນຊົນ
ຄະນະເລຂາທິການ ສະພາແຫ່ງຊາດ
ສະຖານີໂທລະພາບ
ກອງທັບປະຊາຊົນລາວ (LATV)
ສະເໜີລາຍການ
"ກົດໝາຍເພື່ອປະຊາຊົນ"
ອອກອາກາດທາງສະຖານີ ໂທລະພາບ
ກອງທັບປະຊາຊົນລາວ (LATV)
ທຸກໆ ວັນອາທິດ ເວລາ 7:30 - 8:00 ໂມງ
ແລະ ທຸກໆ ວັນພຸດ ເວລາ 19:45 - 20:00 ໂມງ
ເລີ່ມອອກອາກາດ ວັນທີ 3 ສິງຫາ 2022 ນີ້ ເປັນຕົ້ນໄປ

# ກຳປູເຈຍ "ສົ່ງຕໍ່ຄ້ອນຕີ" ມອບໜ້າທີ່ເປັນປະທານອາຊຽນໃຫ້ອິນໂດເນເຊຍ

**ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ**

*ນາຍົກລັດຖະມົນຕີກຳປູເຈຍ ສົ່ງມອບຄ້ອນຕີໄມ້ໃຫ້ປະທານາທິບໍດີອິນໂດເນເຊຍ ເປັນຂີດໝາຍການກ້າວເຂົ້າສູ່ການເປັນປະທານອາຊຽນ ໃນປີ 2023.*

ຕາມຂ່າວລາຍງານໃນວັນທີ 14 ພະຈິກ 2022 ໃຫ້ຮູ້ວ່າ: ສົມເດັດ ຮຸນແຊນ ນາຍົກລັດຖະມົນຕີກຳປູເຈຍ ຖະແຫລງການໃນພິທີປິດກອງປະຊຸມສຸດຍອດຜູ້ນຳອາຊຽນທີ່ນະຄອນຫລວງພະນົມເປັນ ເມື່ອວັນອາທິດທີ 13 ພະຈິກຜ່ານມາ ໃຫ້ສະມາຊິກ 10 ປະເທດອາຊຽນ ຮ່ວມກັນສະແດງຄວາມສາມັກຄີ ແລະ ຄວາມປອງດອງກັນ ເພື່ອຮັກສາຜົນປະໂຫຍດລວມຂອງພາກພື້ນ ເຊິ່ງການເພີ່ມທະວີການຮ່ວມມືຂອງອາຊຽນ ຈະຊ່ວຍເສີມສ້າງສັນຕິພາບ, ຄວາມຄ່ອງຕົວ ແລະ ຄວາມປອງດອງກັນຂອງປະຊາຄົມອາຊຽນ. ຈາກນັ້ນ, ຜູ້ນຳກຳປູເຈຍໄດ້ມອບຄ້ອນຕີໄມ້ປະທານອາຊຽນ ຕໍ່ໃຫ້ທ່ານ ໂຈໂກ ວິໂດໂດ ປະທານາທິບໍດີອິນໂດເນເຊຍ ຜູ້ທີ່ຈະເປັນປະທານອາຊຽນໃນປີໜ້າ.

ໂອກາດດັ່ງກ່າວ, ທ່ານ ໂຈໂກ ວິໂດໂດ ໄດ້ກ່າວວ່າ "ອາຊຽນຕ້ອງບໍ່ເປັນຫຸ່ນຍົນ ຫລື ຕົວແທນ ໃຫ້ກັບມະຫາອຳນາດຂອງປະເທດໃດໜຶ່ງ ແລະ ຕ້ອງເພີ່ມທະວີການຮ່ວມມືກັນ ບໍ່ໃຫ້ປະເທດໃຫຍ່ອີງອາໄສພູມສາດການເມືອງໃນອາຊີຕາເວັນອອກສ່ຽງໃຕ້ ເພື່ອເປັນສະໜາມຮົບສົງຄາມເຢັນຄັ້ງໃໝ່".

**ແຫລ່ງຂໍ້ມູນ: REUTERS**




# ມຽນມາ ປັບພາສີລົດໄຟຟ້າເປັນສູນ

**ແປ ແລະ ຮຽບຮຽງ: ທະນາກອນ**



ອີງຕາມການລາຍງານຂ່າວໃນວັນທີ 11 ພະຈິກ 2022 ໃຫ້ຮູ້ວ່າ: ມຽນມາກຳນົດອັດຕາພາສີອາກອນເປັນສູນສຳລັບການນຳເຂົ້າລົດໄຟຟ້າ (EV) ເລີ່ມແຕ່ວັນທີ 2 ພະຈິກເປັນຕົ້ນມາ.

ລາຍງານລະບຸວ່າ: ການເຄື່ອນໄຫວດັ່ງກ່າວ ມີຈຸດໝາຍເພື່ອສົ່ງເສີມການນຳໃຊ້ລົດໄຟຟ້າໃນປະເທດ ແລະ ພັດທະນາອຸດສາຫະກຳລົດໄຟຟ້າ ແລະ ທຸລະກິດທີ່ກ່ຽວຂ້ອງ.

ກະຊວງກ່ຽວຂ້ອງລະບຸວ່າ: ອັດຕາພາສີອາກອນສຳລັບລົດໄຟຟ້າພະລັງງານແບັດເຕີຣີ (BEV) ທີ່ນຳເຂົ້າໃນຮູບແບບລົດທີ່ຜະລິດໃນຕ່າງປະເທດ ແລະ ນຳເຂົ້າມາເປັນຄັນ (CBU), ລົດທີ່ຜະລິດໃນປະເທດໂດຍໃຊ້ສ່ວນປະກອບພາຍໃນ ແລະ ຕ່າງປະເທດ (CKD) ແລະ ລົດທີ່ປະກອບບາງສ່ວນມາຈາກຕ່າງປະເທດ (SKD) ຈະເປັນສູນຈົນຮອດວັນທີ 31 ມີນາ 2023.

ກະຊວງດັ່ງກ່າວ ຍັງລະບຸວ່າ: ພາສີອາກອນເປັນສູນສຳລັບລົດໄຟຟ້າ ໄດ້ຮັບການອະນຸມັດຈາກລັດຖະບານສະຫະພາບແລ້ວ ໂດຍຄວບຄຸມລົດລາກຈູງ, ລົດໂດຍສານ, ລົດບັນທຸກ, ລົດສາມລໍ້, ລົດຈັກໄຟຟ້າ, ລົດຖີບໄຟຟ້າ, ລົດພະຍາບານ, ລົດນັກໂທດ ແລະ ລົດບັນທຸກສົບ.

ຂະນະທີ່ອຸປະກອນເສີມ ແລະ ຊິ້ນສ່ວນອາໄຫລ່ສຳລັບລົດໄຟຟ້າພະລັງງານແບັດເຕີຣີທີ່ໄດ້ຮັບອະນຸມັດຈາກກະຊວງໄຟຟ້າ ແລະ ກະຊວງອຸດສາຫະກຳ ລ້ວນປອດພາສີອາກອນເຊັ່ນກັນ.

ລາຍງານຊີ້ວ່າ: ບັນດາບໍລິສັດລົດໄຟຟ້າຕ່າງປະເທດຕ່າງບຸກເຂົ້າສູ່ຕະຫລາດມຽນມາ ແລະ ແນະນຳຍີ່ຫໍ້ລົດຂອງຕົນເອງເພີ່ມຂຶ້ນ ເນື່ອງຈາກມຽນມາກຳລັງສະໜັບສະໜູນການໃຊ້ລົດໄຟຟ້າ.

ກະຊວງໄຟຟ້າມຽນມາລະບຸໃນຖະແຫລງການວັນທີ 31 ສິງຫາວ່າ: ກະຊວງຈະດຳເນີນໂຄງການຕົວແບບເພື່ອສ້າງສະຖານີຊາກລົດໄຟຟ້າ 5 ແຫ່ງ ຕາມທາງດ່ວນຢ່າງກຸ້ງ-ມັນທະເລ.

**ແຫລ່ງຂ່າວ: https://auto.economictimes.indiatimes.com/**

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ
ທ່ານ ເປຄຳ ລໍຄຳສອນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ